# ບົດຮຽນທີ 1

## ພຣະເຈົ້າຊົງນຳຜູ້ທີ່ເຊື່ອໃນພຣະອົງ ຢ່າງໃດ?

**ເປົ້າໝາຍ** : ເພື່ອໃຫ້ຜູ້ຮຽນຮູ້ວ່າພຣະຄັມພີແມ່ນພຣະທັມອັນບໍຣິສຸດຂອງພຣະເຈົ້າ ທີ່ພຣະອົງຊົງປະທານ ໃຫ້ແກ່ມະນຸດ ເພື່ອການສັ່ງສອນແລະການດຳເນີນຊີວິດ.

**ຂໍ້ພຣະຄັມພີ**: 2 ຕີໂມທຽວ 3:16-17, ໂຢຮັນ 20:30-31

**ມະນຸດຕ້ອງການພຣະຄັມພີ:**

ເຮືອຕ້ອງການນາຍທ້າຍສັນໃດ ມະນຸດກໍຕ້ອງການພຣະທັມຂອງພຣະເຈົ້າໃນການນຳທາງສັນນັ້ນ. ການດຳເນີນຊີວິດເປັນເໝືອນການເດີນທາງ ຊຶ່ງຈຳເປັນຕ້ອງມີແຜນທີ່, ພຣະຄັມພີເປັນເໝືອນແຜນທີ່ໃນການດຳເນີນຊີວິດ

**ຫວີຜົມທຸກວັນ**

ຜູ້ຍິງຕາມຊົນນະບົດບາງແຫ່ງຫວີຜົມປີລະເທື່ອ ດັ່ງນັ້ນເວລາລາວຫວີຈຶ່ງເຈັບປວດຫລາຍ ໃນວັນນຶ່ງຜູ້ຍິງຄົນນັ້ນມີໂອກາດໄດ້ເຂົ້າໄປໃນເມືອງ ເມື່ອລາວເຫັນຜູ້ຍິງໃນເມືອງຫວີຜົມທຸກວັນກໍແປກໃຈ ຄິດວ່າຜູ້ຍິງໃນເມືອງຄົນນັ້ນຄົງຕ້ອງເຈັບປວດທຸກວັນ. ແຕ່ຄວາມຈິງຄົນທີ່ຫວີຜົມທຸກວັນຈະບໍ່ເຈັບເພາະຜົມບໍ່ຫຍຸ້ງແລະເປັນຄວາມຊິນເຄີຍ. ການອ່ານພຣະຄັມພີກໍເຊັ່ນດຽວກັນ ອ່ານທຸກວັນກໍໄດ້ຮັບຄວາມສວ່າງທຸກວັນ ໄດ້ສຶກສາແລະກະທຳຕາມຄຳສອນຂອງພຣະເຈົ້າຈົນກາຍເປັນຄວາມຊິນເຄີຍ, ຈົນກາຍເປັນນິສັຍ, ສາມາດປະຕິບັດຕາມໄດ້ຢ່າງງ່າຍດາຍ.

## ພຣະຄັມພີມີຄວາມສຳຄັນຢ່າງໃດ?

### 1. ພຣະຄັມພີຂຽນຂຶ້ນໂດຍການດົນໃຈຈາກພຣະເຈົ້າ

ການດົນໃຈຄືຫຍັງ? ພຣະຄັມພີບໍ່ໄດ້ຂຽນຂຶ້ນຕາມຄວາມຄິດເຫັນຫລືຕາມຄວາມເຂົ້າໃຈຂອງມະນຸດເທົ່ານັ້ນ ແຕ່ພຣະເຈົ້າຊົງເລືອກເອົາບຸກຄົນທີ່ພຣະອົງເຫັນວ່າເໝາະສົມ ໃຫ້ຂຽນພຣະຄັມພີຂຶ້ນໂດຍການຊົງນຳຂອງພຣະອົງ ຊຶ່ງບໍ່ໄດ້ໝາຍຄວາມວ່າພຣະເຈົ້າໃຊ້ມະນຸດໃຫ້ຂຽນຂຶ້ນດ້ວຍການ "ຈັບມື " ໃຫ້ຂຽນ ແຕ່ພຣະເຈົ້າໄດ້ຊົງ " ດົນໃຈ " ຫລື "ທຳງານໃນຈິດໃຈ " ໃຫ້ຂຽນຂຶ້ນຕາມພາສາ, ຂນົບທັມນຽມແລະຄວາມຄິດຂອງມະນຸດ ໂດຍພຣະເຈົ້າເປັນຜູ້ຮ່ວມມືນຳ. ການດົນໃຈທີ່ກ່າວມານີ້ບໍ່ໄດ້ຫມາຍຄວາມວ່າພຣະເຈົ້າໃຊ້ມະນຸດໂດຍທີ່ເຂົາເຈົ້າບໍ່ເຂົ້າໃຈຕົນເອງເລີຍ ພຣະອົງບໍ່ໄດ້ໃຊ້ມະນຸດເຫມືອນກັບໃຊ້ "ເຄື່ອງພິມດີດ" ຫລື "ເຄື່ອງຈັກ" ແຕ່ເຂົາເຈົ້າຂຽນຂຶ້ນດ້ວຍຄວາມສລຽວສລາດແລະມີເຫດຜົນ. ບັນດາຜູ້ທີ່ຂຽນພຣະຄັມພີອາດຈະບໍ່ເຄີຍຄິດເລີຍວ່າ ເຣື່ອງລາວທີ່ເຂົາເຈົ້າຂຽນຂຶ້ນໄດ້ຮັບການດົນໃຈຈາກພຣະເຈົ້າແລະໃນວັນນຶ່ງຈະກາຍເປັນ

ສ່ວນນຶ່ງຂອງພຣະຄັມພີ. ຄຣິສຕຽນເຮົາເຊື່ອວ່າພຣະຄັມພີທຸກຕອນໄດ້ຮັບການດົນໃຈຈາກພຣະເຈົ້າ ແລະພຣະຄໍາຂອງພຣະເຈົ້າເປັນຄວາມຈິງທີ່ຫາຂໍ້ຂັດແຍ່ງບໍ່ໄດ້ ນີ້ຄືຄວາມເຊື່ອໝັ້ນທີ່ຍຶດຖືມາເປັນເວລາດົນນານຕັ້ງແຕ່ເລີ້ມສ້າງໂລກຈົນເຖິງທຸກວັນນີ້.

"*ພຣະຄັມພີທຸກຕອນ ໄດ້ຮັບການຊົງບັນດົນໃຈຈາກພຣະເຈົ້າ ແລະເປັນປໂຍດໃນການສອນ, ການກ່າວຕັກເຕືອນວ່າກ່າວ, ການປັບປຸງແກ້ໄຂໃຫ້ຖືກຕ້ອງ, ແລະການອົບຮົມໃນທາງຊອບທັມ, ເພື່ອຄົນຂອງພຣະເຈົ້າຈະບັນລຸຜົນສໍາເຣັດ, ແລະຈັດຕຽມໄວ້ພ້ອມສໍາລັບການດີທຸກຢ່າງ*" ( 2 ຕີໂມທຽວ 3:16-17 )

## 2. <u>ພຣະຄັມພີເປັນປໂຍດໃນການສັ່ງສອນ</u>

ຕາມປົກະຕິແລ້ວຄົນເຮົາໃຊ້ເວລາສ່ວນໃຫຍ່ໃນການສຶກສາຮໍ່າຮຽນ ຄືເລີ້ມຮຽນຕັ້ງແຕ່ອາຍຸ 5 ປີຫລືໄວກວ່ານັ້ນໂດຍສະເລັ່ຍແລ້ວ, ກວ່າຈະຮຽນຈົບມຫາວິທຍາລັຍກໍຕ້ອງໃຊ້ເວລາຢ່າງນ້ອຍ 16 ປີ. ນອກຈາກນີ້ເຮົາຍັງຮຽນວິຊາການຕ່າງໆ ຢູ່ສເມີ, ທັງວິຊາຊີບແລະຄວາມຮູ້ທົ່ວໄປ, ທັງຫຼັກສູດພິເສດ ແລະຮຽນດ້ວຍຕົນເອງ, ເຮົາຮຽນວິທີປະກອບທຸຣະກິດໃຫ້ປະສົບຄວາມສໍາເຣັດ, ຮຽນແພດເພື່ອຈະຮູ້ຈັກຮັກສາປິ່ນປົວຄວາມເຈັບໄຂ້ໄດ້ປ່ວຍ. ເຮົາໄດ້ຮຽນວິຊາຄວາມຮູ້ຫລາຍຢ່າງ, ແມ່ນແຕ່ວິຊາລັກເລັກຂະໂມຍນ້ອຍ, ຕັດຊ່ອງຢ່າງເບົາ, ກໍຍັງມີຂ່າວໃນໜ້າໜັງສືພິມວ່າມີສະຖາບັນນອກກົດໝາຍທີ່ສອນວິຊາດັ່ງກ່າວນີ້ດ້ວຍ.

ແຕ່ວ່າເຮົາໃຊ້ເວລາຫລາຍພຽງໃດໃນການສຶກສາພຣະຄໍາຂອງພຣະເຈົ້າເພື່ອຈະຮູ້ວ່າເຮົາຄວນຈະດໍາເນີນຊີວິດຢ່າງໃດຈຶ່ງຈະມີຄວາມສຸກ, ເຮັດຢ່າງໃດເຮົາຈຶ່ງຈະມີຊີວິດທີ່ມີຄວາມໝາຍ, ເຮົາຄວນປະຕິບັດຕໍ່ຜູ້ອື່ນຫລືຕົນເອງຢ່າງໃດເຮົາຈຶ່ງຈະມີຊີວິດທີ່ພໍພຣະທັຍພຣະເຈົ້າ. ທ່ານຮູ້ຫລືບໍ່ວ່າ ສັງຄົມຂອງຄົນເຮົາມີບັນຫາ

ຫລາຍຢ່າງ ທັງໆ ທີ່ໂລກເຮົາຈະເຣີນຂຶ້ນທາງດ້ານວິຊາການແລະຄວາມຮູ້, ເຫດທີ່ເປັນເຊັ່ນນັ້ນ ກໍເພາະວ່າຄົນເຮົາຂາດຄວາມຮູ້ເຣື່ອງຄໍາສອນຂອງພຣະເຈົ້ານັ້ນເອງ.

## 3. <u>ພຣະຄັມພີເປັນປໂຍດໃນການຕັກເຕືອນວ່າກ່າວ</u>

ຖ້າເຮົາສຶກສາເບື້ອງຫລັງຂອງຜູ້ທີ່ກາຍເປັນອາຊຍາກອນ ເຮົາຈະພົບວ່າສ່ວນໃຫຍ່ເຂົາເຈົ້າເຫລົ່ານັ້ນເປັນຄົນທີ່ເຕີບໃຫຍ່ຂຶ້ນໂດຍຂາດ "ການຕັກເຕືອນວ່າກ່າວ" ອາດຈະເປັນເພາະວ່າ

1) ຂາດພໍ່ແມ່.
2) ພໍ່ແມ່ຫຍຸ້ງເກີນໄປ ຈົນບໍ່ມີເວລາຕັກເຕືອນວ່າກ່າວລູກ.
3) ບໍ່ມີຮາກຖານຄວາມຮູ້, ຄວາມເຂົ້າໃຈ, ໃນພຣະຄໍາຂອງພຣະເຈົ້າ .

ໃນທີ່ສຸດກໍເລີຍບໍ່ຮູ້ວ່າອັນໃດຜິດອັນໃດຖືກ, ຕ້ອງສູນເສັຍອະນາຄົດໄປຢ່າງໜ້າເສັຽດາຍ ພຣະຄັມພີຫລືພຣະຄໍາຂອງພຣະເຈົ້າເຕັມໄປດ້ວຍຄໍາຕັກເຕືອນວ່າກ່າວທີ່ຊ່ອຍໃຫ້ເຮົາຮູ້ວ່າສິ່ງໃດຖືກສິ່ງໃດຜິດສິ່ງໃດຄວນສິ່ງໃດບໍ່ຄວນ ເຮົາມີຊີວິດຢູ່ກັບສັນຍານເຕືອນພັຍຕ່າງໆເປັນປະຈໍາທຸກວັນ ເຊັ່ນສັນຍານຈະຣາຈອນ, ແລະໄຟໄໝ້ ຖ້າເຮົາບໍ່ສົນໃຈກັບສັນຍາດັ່ງກ່າວນັ້ນ ເຮົາກໍຄົງຈະມີຊີວິດຢູ່ບໍ່ໄດ້ດົນ.

ໃນທຳນອງດຽວກັນເຮົາຈຳເປັນຕ້ອງເອົາໃຈໃສ່ຕໍ່ຄຳເຕືອນຂອງພຣະເຈົ້າທີ່ປາກົດໃນພຣະຄັມພີ ຕລອດເວລາ ເພື່ອເຮົາຈະພົ້ນຈາກພັຍແຫ່ງຄວາມຜິດບາບ, ຄວາມພິນາດ, ທີ່ທຳລາຍລ້າງຊີວິດແລະຈິດ ວິນຍານຂອງເຮົາ.

4. <u>ພຣະຄັມພີເປັນປໂຍດໃນການອົບຮົມໃນທາງທັມ</u>:

ກ. ຄົນຊອບທັມຄືຄົນປະເພດໃດ? ຄື ຄົນທີ່ດຳເນີນຊີວິດຢ່າງຫາທີ່ຕິບໍ່ໄດ້ແລະປະຕິບັດຖືກຕ້ອງໃນທາງ ທັມ.

ຂ. "ທັມ" ຫມາຍເຖີງອັນໃດ? ເມື່ອເຮົາເວົ້າເຖິງ "ທັມ " ເຮົາໝາຍເຖິງສິ່ງທີ່ດີສິ່ງທີ່ຖືກຕ້ອງ ພຣະຄັມພີ ສອນໃຫ້ເຮົາຮູ້ວ່າ ເຮົາຄວນດຳເນີນຊີວິດຢ່າງໃດຈຶ່ງຈະເປັນຜູ້ຊອບທັມໃນສາຍພຣະເນດຂອງພຣະ ເຈົ້າ.

ຄ. ເປັນຫຍັງສິນທັມຈຶ່ງເສື່ອມ? ຄົນຈຳນວນຫລາຍເວົ້າວ່າ "ສິນທັມເສື່ອມ " ແທ້ຈິງແລ້ວສິນທັມບໍ່ໄດ້ ເສື່ອມແຕ່ຄວາມປະພຶດ ອຸປະນິສັຍໃຈຄໍຂອງຄົນເຮົາຕ່າງຫາກທີ່ເສື່ອມໄປ ເພາະຂາດຄວາມສົນໃຈໃນ ການອົບຮົມ.

5. <u>ຊ່ອຍຄົນຂອງພຣະເຈົ້າໃຫ້ຕຽມພ້ອມເພື່ອທຳການດີທຸກຢ່າງ</u>

ພຣະເຈົ້າຊົງມີແຜນການອັນດີສຳລັບມະນຸດທຸກຄົນ ແຕ່ເນື່ອງຈາກຄວາມດື້ດຶງ ບໍ່ຍອມດຳລົງຊີວິດ ຕາມທາງຂອງພຣະເຈົ້າ ແລະຕາມຄຳສອນຂອງພຣະອົງ ຈຶ່ງເປັນເຫດໃຫ້ຄົນຈຳນວນຫລາຍພາດໄປຈາກສິ່ງ ດີທີ່ພຣະເຈົ້າຊົງຈັດຕຽມໄວ້ໃຫ້. ຄັ້ງນຶ່ງນານມາແລ້ວມີຜົວເມັຽຄູ່ນຶ່ງມີລູກຊາຍຢູ່ຄົນນຶ່ງທັ້ງສອງຮັກລູກຫລາຍ ຢາກຈະໃຫ້ລູກມີອະນາຄົດອັນສົດໃສຈຶ່ງພຍາຍາມອົບຮົມສັ່ງສອນລູກຢ່າງດີ ສົ່ງໃຫ້ເຂົ້າໂຮງຮຽນຊັ້ນດີ ແຕ່ ຜົນປາກົດວ່າລູກຄົນນີ້ກັບບໍ່ສົນໃຈພໍ່ແມ່, ສອນອັນໃດກໍບໍ່ເຮັດຕາມ, ໄປໂຮງຮຽນກໍບໍ່ສົນໃຈຮຽນ, ຕໍ່ມາພໍ່ແມ່ ໄດ້ເສັຽຊີວິດໄປລູກຄົນນີ້ໝົດທີ່ເພິ່ງຈຶ່ງຕົກຢູ່ໃນຄວາມຍາກລຳບາກກາຍເປັນຄົນທີ່ໜ້າສົງສານ ບົດຮຽນຊີວິດ ບົດນີ້ສອນໃຫ້ເຮົາຮູ້ວ່າ

1. ພໍ່ແມ່ບໍ່ປະສົງຈະໃຫ້ລູກເປັນເຊັ່ນນັ້ນ
2. ລູກດື້ດຶງ ບໍ່ເຮັດຕາມຄຳສັ່ງສອນແລະເງື່ອນໄຂທີ່ພໍ່ແມ່ວາງໄວ້
3. ໃນທີ່ສຸດລູກຈຶ່ງພາດຈາກສິ່ງດີ ທີ່ລາວຄວນຈະໄດ້ຮັບ.

ເຮົາເຄີຍປ່ອຍໃຫ້ຄວາມດື້, ເອົາໃຈຕົນເອງ, ບໍ່ເອົາໃຈໃສ່, ແລະຍອມໃຫ້ອຳນາດຝ່າຍຕ່ຳ (ຜີມານ) ຊັກຊວນໄປໃນທາງຜິດ ທີ່ເຮົາບໍ່ຄວນເດີນໄປຫຼືບໍ່ ?

ຖ້າເຮົາປະຕິບັດຕາມພຣະຄຳຂອງພຣະເຈົ້າກໍເທົ່າກັບວ່າເຮົາໄດ້ຕຽມຕົວພ້ອມເພື່ອຈະຮັບສິ່ງດີ ແລະ ທຳການດີຕາມທາງອັນຊອບທັມຂອງພຣະອົງ ພຣະເຢຊູຊົງກ່າວວ່າທາງໃນໂລກນີ້ມີຢູ່ສອງທາງຄືທາງກວ້າງ ຫລືທາງແຫ່ງການເຮັດຕາມໃຈຕົນເອງ ປາຍທາງເສັ້ນນີ້ຄືຄວາມພິນາດ ສ່ວນອີກທາງນຶ່ງຄືທາງແຄບຫລື

ທາງແຫ່ງການບັງຄັບໃຈຕົນເອງ ຄືການເດີນຢູ່ໃນທາງຂອງພຣະເຈົ້າ ປາຍທາງເສັ້ນນີ້ຄືຊີວິດນິຣັນດອນ ຂໍ້ທ່ອງຈຳ *"ເພາະວ່າພຣະທັມຂອງພຣະເຈົ້າປະກອບດ້ວຍຊີວິດແລະຣິດເດດ, ຄົມກວ່າດາບສອງຄົມທຸກດວງ ແທງຊອດເຖິງຈິດໃຈແລະວິນຍານແລະທັງຄໍ່ກະດູກ ແລະໄຂໃນກະດູກຕິດຕໍ່ກັນ ຈຶ່ງສັງເກດຮູ້ຄວາມຄິດແລະຄວາມມຸ້ງໝາຍໃນໃຈໄດ້"* ເຮັບເຣີ 4 ຂໍ້ 12

**<u>ຂໍ້ຄວນຈຳ</u>:**

ພຣະເຈົ້າຊົງຮູ້ວ່າມະນຸດຕ້ອງການຜູ້ນຳທາງໃນການດຳເນີນຊີວິດ ດັ່ງນັ້ນພຣະອົງຈຶ່ງດົນໃຈຜູ້ປະກາດພຣະທັມຂອງພຣະອົງໃຫ້ຂຽນພຣະຄັມພີຂຶ້ນແລະໂດຍທາງພຣະຄັມພີນີ້ເອງ ພຣະເຈົ້າຊົງໄດ້ຕັສ (ເວົ້າ ) ກັບມະນຸດຕັ້ງແຕ່ອະດີດຈົນເຖິງປະຈຸບັນນີ້

**<u>ພາກປະຕິບັດ</u>**

ຫລັງຈາກສຶກສາບົດຮຽນນີ້ແລ້ວ ຂ້າພະເຈົ້າຕັ້ງໃຈວ່າ ຕັ້ງແຕ່ມື້ນີ້ເປັນຕົ້ນໄປ ຂ້າພະເຈົ້າຈະກະທຳດັ່ງຕໍ່ໄປນີ້

1. _______________________________________________.
2. _______________________________________________.
3. _______________________________________________.

✞

ຮຽບຮຽງ: ໄພສານ ສົມສິດທ໌

## ບົດຮຽນທີ 2

**ມາທຳຄວາມຮູ້ຈັກກັບພຣະຄັມພີກັນເທາະ**

**ເປົ້າໝາຍ:** ເພື່ອຊ່ອຍໃຫ້ຜູ້ຮຽນ ຮູ້ຈັກວ່າພຣະຄັມພີມີປື້ມຢູ່ຈັກເຫຼັ້ມແລະໃນແຕ່ລະເຫຼັ້ມມີເຣື່ອງແລະຄຳສອນກ່ຽວກັບອັນໃດແດ່ ?

**ຂໍ້ພຣະຄັມພີ:** ພຣະທັມອົບພະຍົບ 34:27 ພຣະບັນຍັດ 27:8; 31:9

**ຫ້ອງສມຸດ:** ຕາມຫ້ອງສມຸດສາທາຣະນະທົ່ວໄປມີປື້ມກ່ຽວກັບວິຊາການຕ່າງໆເຊັ່ນປະວັດສາດວັນນະຄະດີ, ຈິດໝາຍ, ຫຼືເຣື່ອງສນຸກມ່ວນຊື່ນຕື່ນເຕັ້ນປະຈົນພັຍຕ່າງໆ. ທ່ານຮູ້ຫລືບໍ່ວ່າພຣະຄັມພີກໍຄ້າຍຄືກັນກັບຫ້ອງສມຸດ, ເພາະວ່າໃນພຣະຄັມພີມີເຣື່ອງຕ່າງໆ ຫລາຍເຣື່ອງ, ແລະມີປື້ມຫລາຍເຫຼັ້ມປະກອບເຂົ້າກັນເປັນປື້ມເຫຼັ້ມໃຫຍ່ນຶ່ງເຫຼັ້ມ.

### ພຣະຄັມພີມີຢູ່ 2 ພາກ

1. **ພາກພຣະສັນຍາເດີມ**

ນິຍົມເອີ້ນຫລາຍຢ່າງເຊັ່ນ ພຣະຄັມພີເດີມຫຼືພຣະສັນຍາເດີມ( ບາງຄົນໃຊ້ຄຳວ່າ “ເກົ່າ ແທນຄຳວ່າເດີມ ພາກພຣະສັນຍາເດີມມີປື້ມທັງໝົດ 39 ເຫຼັ້ມ (ກະຣຸນາເບິ່ງສາລະບານໃນພຣະຄັມພີປະກອບໄປນຳ) ທັງ 39 ເຫຼັ້ມນີ້, ມີ 5 ໝວດ ແລະມີສ່ວນກ່ຽວຂ້ອງກັບເຣື່ອງຕ່າງໆດັ່ງຕໍ່ໄປນີ້

1. **ປະວັດສາດ:** ເປັນເຣື່ອງກຽວກັບການຊົງສ້າງໂລກຂອງພຣະເຈົ້າແລະເຣື່ອງກ່ຽວກັບບຸກຄົນ ແລະຊົນຊາດທີ່ພຣະເຈົ້າຊົງເລືອກ ເພື່ອປະຕິບັດພຣະຣາຊກິດຂອງພຣະອົງ.
2. **ພຣະບັນຍັດ:** ເປັນເຣື່ງກ່ຽວກັບ ຫລັກປະຕິບັດໃນພິທີທາງສາສນາແລະການດຳເນີນຊີວິດ.
3. **ວັນນະຄະດີ:** ກ່ຽວກັບບົດເພງ ແລະກາບກອນທີ່ໃຊ້ໃນການນມັສການພຣະເຈົ້າ ແລະບັນລະຍາຍເຖິງຄວາມຮັກຄວາມເມດຕາຂອງພຣະເຈົ້າ.
4. **ຄຳທຳນວາຍໃຫຍ່:** ເປັນເຣື່ອງກ່ຽວກັບຊີວິດແລະຄຳສອນຂອງຜູ້ຮັບໃຊ້ພຣະເຈົ້າຕລອດເຖິງສິ່ງທີ່ພຣະເຈົ້າຊົງສຳແແດງແກ່ໄພ່ພົນຂອງພຣະອົງແລະບັນດາປະຊາຊາດຕ່າງໆ.
5. **ຄຳທຳນວາຍນ້ອຍ** (ມີເນື້ອໃນໃຈຄວາມຄ້າຍຄືກັນກັບຄຳທຳທວາຍໃຫຍ່ )

ຫມາຍເຫດ 1. ຜູ້ທຳນວາຍ ສ່ວນຫຼາຍເອີ້ນວ່າຜູ້ປະກາດພຣະທັມ.

2. ການທີ່ເຮົາເອີ້ນວ່າ ຄຳທຳນວາຍນ້ອຍແລະແລະຄຳທຳນວາຍໃຫຍ່ ບໍ່ໄດ້ກ່ຽວຂ້ອງກັບຄວາມຍິ່ງໃຫຍ່ ຫຼືຄວາມສຳຄັນຫລາຍນ້ອຍຕ່າງກັນແຕ່ຢ່າງໃດ ຫາກແຕ່ເປັນການແບ່ງຕາມຂນາດຂອງປື້ມຄືເຫຼັ້ມໃດທີ່ມີເນື້ອໃນໃຈຄວາມຍາວກໍເອີ້ນວ່າຜູ້ທຳນວາຍໃຫຍ່ ເຫຼັ້ມໃດທີ່ມີເນື້ອໃນໃຈຄວາມສັ້ນກໍເອີ້ນວ່າຄຳທຳນວາຍນ້ອຍ.

2. **ພາກພຣະສັນຍາໃໝ່**

ນິຍົມເອີ້ນກັນຫລາຍຢ່າງ ເຊັ່ນພຣະຄັມພີໃໝ່ ຫຼືພຣະສັນຍາໃໝ່. ພາກພຣະສັນຍາໃໝ່ມີປຶ້ມທັງໝົດ 27 ເຫຼັ້ມ (ກະຣຸນາເບິ່ງສາລະບານໃນພຣະຄັມພີປະກອບໄປນຳ) ທັງ 27 ເຫຼັ້ມນີ້ແບ່ງອອກເປັນ 5 ໝວດ ແລະ ມີສ່ວນກ່ຽວຂ້ອງກັບເຣື່ອງຕ່າງໆດັ່ງຕໍ່ໄປນີ້

1. **ໝວດຂ່າວປະເສີດ** (ພຣະກິດຕິຄຸນ): ເປັນເຣື່ອງກ່ຽວກັບຊີວະປະວັດແລະຄຳສອນຂອງພຣະເຢຊູຄຣິດ.
2. **ໝວດປະວັດສາດ**: ເປັນເຣື່ອງກ່ຽວກັບການທຳງານຂອງພຣະວິນຍານບໍຣິສຸດໃນຊີວິດຂອງບັນດາອັຄສາວົກ ແລະບັນດາຄຣິສຕຽນໃນຍຸກເລີ້ມແລກ.
3. **ໝວດຈົດໝາຍຂອງອັຄສາວົກໂປໂລ**: ເປັນຄຳສອນກ່ຽວກັບການດຳເນີນຊີວິດແລະການບໍຣິຫານຄຣິສຕະຈັກ ຂຽນໂດຍອັຄສາວົກໂປໂລ.
4. **ໝວດຈົດໝາຍຂອງອັຄສາວົກຄົນອື່ນໆ**: ມີເນື້ອໃນຄ້າຍຄືກັນກັບຈົດໝາຍຂອງອັຄສາວົກໂປໂລ.
5. **ໝວດຄຳທຳນວາຍ**: (ພຣະນິມິດ) ເປັນຄຳທຳນວາຍທີ່ພຣະເຈົ້າຊົງປະທານໃຫ້ແກ່ອັຄສາວົກໂຢຮັນ ໄດ້ເຫັນເປັນນິມິດ ກ່ຽວກັບເຫດການທີ່ຈະເກີດຂຶ້ນຕໍ່ໂລກແລະຈັກກະວານໃນອະນາຄົດ.

**<u>ສິ່ງທີ່ຈຳເປັນຕ້ອງຮູ້ກ່ຽວກັບພຣະຄັມພີ</u>**

1.ແປເປັນພາສາຕ່າງໆ ຫລາຍທີ່ສຸດໃນໂລກ.

2. ມີຄົນອ່ານຫລາຍທີ່ສຸດໃນໂລກ.

3. ເຮັດໃຫ້ຜູ້ອ່ານໄດ້ຮັບການປ່ຽນແປງຊີວິດໃໝ່ ຫລາຍກ່ວາປຶ້ມອື່ນໆ.

4. ໃຊ້ເວລາຂຽນປະມານ 1600 ປີ ໂດຍມີຜູ້ຂຽນທັງໝົດ 40 ຄົນ ແຕ່ເຣື່ອງລາວໃນພຣະຄັມພີກໍສອດຄ່ອງກັນ

ດີ, ຜູ້ຂຽນແຕ່ລະຄົນມີຊີວິດຢູ່ໃນຍຸກແລະສມັຍທີ່ຕ່າງກັນ, ຕ່າງພາສາ, ເຊື້ອຊາດ, ແຕ່ເນື້ອໃນໃຈຄວາມເປັນເຣື່ອງດຽວກັນຄື ຄວາມຮັກຂອງພຣະເຈົ້າຕໍ່ມະນຸດແລະຄວາມພຍາຍາມຂອງພຣະອົງທີ່ຈະຊ່ອຍມະນຸດໃຫ້ລອດພົ້ນຈາກບາບ.

**<u>ພຣະຄັມພີມີຄວາມສຳຄັນຕໍ່ຊີວິດຂອງຂ້າພະເຈົ້າຢ່າງໃດ</u>** ?

**<u>ພາກປະຕິບັດ</u>.** ໃຫ້ເປີດຂໍ້ພຣະຄັມພີດັ່ງຕໍ່ໄປນີ້ແລ້ວຂຽນລົງໃສ່ຊ່ອງຫວ່າງຂ້າງລຸ່ມນີ້ ວ່າພຣະຄັມພີມີຄວາມສຳຄັນຕໍ່ຊີວິດຂອງທ່ານຢ່າງໃດ ?

1. ມັດທາຍ 4:4 ...........................................................................................

2.ໂຢຮັນ 6:37 ...........................................................................................

3. ຟີລິບປອຍ 4:13...........................................................................................

4. ຟີລິບປອຍ 3:13-14 ...........................................................................

**<u>ວິທີຮຽນພຣະຄັມພີ</u>**

ພຣະຄັມພີເປັນອາຫານຝ່າຍຈິດວິນຍານທີ່ຄຣິສຕຽນຕ້ອງອ່ານແລະສຶກສາເປັນປະຈຳ. ຮ່າງກາຍ

ຕ້ອງການອາຫານສັນໃດ ຈິດວິນຍານກໍຕ້ອງການພຣະທັມຂອງພຣະເຈົ້າສັນນັ້ນ. ວິທີທີ່ທ່ານຈະສາມາດສຶກສາພຣະຄັມພີມີຫລາຍວິທີດ້ວຍກັນ ແຕ່ໃນທີ່ນີ້ຂໍແນະນໍາວິທີນຶ່ງໃຫ້ແກ່ທ່ານດັ່ງຕໍ່ໄປນີ້.

1. ໂດຍການສຶກສາພຣະຄັມພີແລະຟັງຄໍາເທສນາທີ່ຄຣິສຕະຈັກ. ຄຣິສຕຽນຄວນຮຽນພຣະຄັມພີ (ບາງແຫ່ງເອີ້ນວ່າໂຮງຮຽນວັນອາທິດ)ແລະນະມັສການພຣະເຈົ້າຢ່າງສມໍ່າສເມີທຸກວັນອາທິດ ເພື່ອຄວາມຈະເຣີນເຕີບໃຫຍ່ຝ່າຍຈິດວິນຍານ.
2. ອ່ານແລະສຶກສາພຣະຄັມພີດ້ວຍຕົນເອງເປັນປະຈໍາທຸກວັນ.
3. ອ່ານແລະສຶກສາພຣະຄັມພີກັບຄອບຄົວທຸກວັນ.
4 ອ່ານແລະສຶກສາພຣະຄັມພີກັບອ້າຍເອື້ອຍນ້ອງຄຣິສຕຽນ.
5. ທ່ອງຈໍາຂໍ້ພຣະຄັມພີໂດຍເລືອກເອົາເຣື່ອງ ຫຼືຂໍ້ພຣະຄັມພີທີ່ເໝາະສົມ, ຂຽນໃສ່ເຈັ້ຍແຜ່ນນ້ອຍໆຕິດໂຕໄປທຸກທີ່ນທຸກແຫ່ງແລະນໍາອອກມາອ່ານຢູ່ເສມີ.
6. ຖືພຣະຄັມພີຕິດຕົວໄປນໍາທຸກແຫ່ງ ເມື່ອມີເວລາກໍເອົາອອກມາອ່ານ.

**<u>ຂໍ້ພຣະຄັມພີທີ່ໄດ້ຮຽນຮູ້ແລະທີ່ທ່ອງຈໍາໄດ້ ຊ່ວຍເຮົາໄດ້ຢ່າງໃດ</u>**?

ຄັ້ງນຶ່ງດົນມາແລ້ວ ມີອ້າຍນ້ອງ 2 ຄົນ, ເມື່ອພໍ່ແມ່ຕາຍແລ້ວ ຊັບສົມບັດກໍຖືກແບ່ງໃຫ້ຄົນລະເທົ່າກັນ ແຕ່ປາກົດວ່າຜູ້ເປັນນ້ອງບໍ່ພໍໃຈ ເພາະຢາກໄດ້ຊັບສົມບັດທັງໝົດ ຈຶ່ງໄດ້ວາງແຜນຂ້າອ້າຍຂອງຕົນເພື່ອຈະໄດ້ຫຸບເອົາຊັບສົມບັດທັງໝົດ. ໃນຄືນທີ່ລາວຕຽມປືນຈະໄປຍິງອ້າຍຂອງຕົນນັ້ນ ຄືຂະນະທີ່ກໍາລັງຈະອອກຈາກເຮືອນໄປ ຂໍ້ພຣະຄັມພີທີ່ລາວເຄີຍຮຽນແລະທ່ອງຈໍາໄດ້ເມື່ອຫລາຍປີຜ່ານມານັ້ນ ກໍປາກົດຂຶ້ນມາໃນສມອງຂອງລາວ ເປັນຄໍາກ່າວຂອງພຣະເຢຊູ ຊຶ່ງກ່າວວ່າ *"ຖ້າເຈົ້າຈະໄດ້ສິ່ງຂອງທັງໝົດໃນໂລກ ແຕ່ຖ້າເຈົ້າສູນເສັຽຈິດວິນຍານຂອງເຈົ້າ ຈະມີປໂຍດອັນໃດ"* ພຣະຄັມພີຂໍ້ນີ້ເຮັດໃຫ້ລາວສໍານຶກຜິດແລະປ່ຽນໃຈບໍ່ຂ້າອ້າຍຂອງຕົນ ຕາມທີ່ຕັ້ງໃຈໄວ້. ດັ່ງນັ້ນເຮົາຈະເຫັນໄດ້ວ່າພຣະທັມຂອງພຣະເຈົ້າທີ່ລາວໄດ້ຮຽນແລະທ່ອງຈໍານັ້ນ ບໍ່ເຮັດໃຫ້ລາວກະທໍາບາບອັນໃຫຍ່ຫລວງ ກາຍປັນຄາດຕະກອນ ຊຶ່ງອາດຈະເປັນຜົນສະທ້ອນຕໍ່ລູກເມັຽແລະອ້າຍຂອງຕົນ.

**<u>ຂໍ້ທ່ອງຈໍາ</u>** ຂ້າພຣະອົງໄດ້ສະສົມພຣະຄໍາຂອງພຣະອົງໄວ້ໃນໃຈເພື່ອຂ້າພຣະອົງຈະບໍ່ກະທໍາບາບຕໍ່ພຣະອົງ ເພງສັຣເສີນ 119:11

**<u>ຂໍ້ຄວນຈໍາ</u>** ພຣະຄັມພີ ບໍ່ແມ່ນຂອງແຄ້ວຂອງຄົງຫລືຂອງວິເສດສໍາຫລັບເອົາໄວ້ຂາບໄຫວ້ບູຊາ ແຕ່ພຣະຄັມພີມີຄວາມໝາຍ, ມີຣິດເດດ, ຫລືມີຜົນຕໍ່ຊີວິດ, ຖ້າຫາກວ່າຂ້າພະເຈົ້າອ່ານ, ຮຽນ, ທ່ອງຈໍາ, ແລະນໍາມາໃຊ້ໃນຊີວິດປະຈໍາວັນຂອງຂ້າພະເຈົ້າ.

**<u>ພາກປະຕິບັດ</u>** ກະຣຸນາຂີດເຄື່ອງໝາຍ(x) ລົງໃສ່ຂໍ້ທີ່ທ່ານຕັ້ງໃຈວ່າຈະນໍາເອົາໄປໃຊ້ໃນຊີວິດປະຈໍາວັນ.
( )ຂ້າພະເຈົ້າຈະທ່ອງພຣະຄັມພີອາທິດລະຂໍ້ . ( )ຂ້າພະເຈົ້າຈະອ່ານພຣະຄັມພີເປັນສ່ວນຕົວທຸກວັນ.
( )ຂ້າເຈົ້າຈະເຊີນຊວນສະມາຊິກໃນຄອບຄົວໃຫ້ອ່ານແລະສຶກສາພຣະຄັມພີກັບຂ້າພະເຈົ້າຢູ່ເລື້ອຍໆເທົ່າ

ທີ່ຈະເຮັດໄດ້ ( ) ຂ້າພະເຈົ້າຈະຖືພຣະຄັມພີຕິດຕົວໄປນຳທຸກແຫ່ງເພື່ອຈະໄດ້ອ່ານແລະໄດ້ຮຽນເລື້ອຍໆ. ( )ຂ້າພະເຈົ້າຈະສຶກສາພຣະຄັມພີໃນໂຮງຮຽນວັນອາທິດແລະຮ່ວມນະມັສການພຣະເຈົ້າທຸກວັນອາທິດໂດຍບໍ່ຂາດ ( )ຂ້າພະເຈົ້າຈະຊື້ພຣະຄັມພີໄວ້ເປັນສົມບັດຂອງຂ້າພະເຈົ້າເອງເພື່ອຈະໄດ້ສຶກສາ, ອ່ານ, ແລະຂີດເສັ້ນກ້ອງຂໍ້ຄວາມທີ່ສຳຄັນໄດ້ໂດຍສະດວກ.

ຊຽນຊື່..................................................
ວັນທີ..................................................

______✞______

*ຮຽບຮຽງ: ໄພສານ ສົມສິດທ໌*

# ບົດຮຽນທີ 3
## ພຣະເຈົ້າຜູ້ຊົງສ້າງ

**ເປົ້າໝາຍ:** ເພື່ອໃຫ້ຜູ້ຮຽນໄດ້ຮູ້ວ່າທຸກສິ່ງທຸກຢ່າງໃນໂລກແລະຈັກກະວານນີ້ ໄດ້ເກີດຂຶ້ນໂດຍການຊົງສ້າງຂອງພຣະເຈົ້າ, ຕາມພຣະປະສົງຂອງພຣະອົງ.

**ຂໍ້ພຣະຄັມພີ**: ປະຖົມການ 1:1-3 ແລະ ໂຢຮັນ 1:1-3

**ບັນຫາໂລກແຕກ:** ໄກ່ເກີດກ່ອນໄຂ່ຫຼືໄຂ່ເກີດກ່ອນໄກ່? ການສຶກສາກ່ຽວກັບຄວາມເປັນມາຂອງສິ່ງຕ່າງໆເປັນການສຶກສາທີ່ໜ້າສົນໃຈແລະຕື່ນເຕັ້ນຫລາຍ ເພາະວ່າໃຜໆກໍຢາກຈະຮູ້ວ່າ ມະນຸດແມ່ນໃຜ? ມາຈາກໃສ? ມີຊີວິດຢູ່ເພື່ອອັນໃດ? ຕາຍແລ້ວຈະໄປໃສ? ພຣະຄັມພີບອກໃຫ້ເຮົາຮູ້ວ່າພຣະເຈົ້າຄື "ພຣະຜູ້ສ້າງ"

**ຄວາມອັສຈັນແຫ່ງການສ້າງ:** ຕາມການວິຈັຍຂອງວິທະຍາສາດພົບວ່າການທີ່ຈະປູກເຂົ້າພຽງແຕ່ເມັດດຽວໃຫ້ສົມບູນ ກໍຍັງໃຊ້ນໍ້າເຖິງ 8 ຫາບ. ນັກເທດຜູ້ນຶ່ງເມື່ອຮູ້ຄວາມຈິງນີ້ລາວໄດ້ຂອບຄຸນພຣະເຈົ້າຢ່າງຫລວງຫລາຍ ທີ່ພຣະອົງຊົງປະທານອາຫານການກິນໃຫ້ມະນຸດ ລາວໄດ້ເອົາຊາມແບນສໍາລັບໃສ່ເຂົ້າກິນ 4 ໃບແລ້ວຂຽນຄໍາເວົ້າໃສ່ຊາມເຫຼົ່ານັ້ນວ່າ "ຂ້ານ້ອຍຈະບໍ່ລືມພຣະຄຸນຂອງພຣະເຈົ້າ"

**ລໍາດັບການສ້າງໂລກຂອງພຣະເຈົ້າ:** ຕາມຂໍ້ພຣະຄັມພີປະຖົມການ 1:1-3 ບອກໃຫ້ເຮົາຮູ້ເຖິງລໍາດັບຂອງການສ້າງດັ່ງຕໍ່ໄປນີ້ :

### 1. ໃນປະຖົມການ:

ຄໍາວ່າປະຖົມການ ບອກໃຫ້ຮູ້ຄວາມຈິງ 2 ປະການຄື 1)ເມື່ອເດີມ "ຫລື ເມື່ອເລີ້ມຕົ້ນ ພຣະເຈົ້າມີຢູ່ແລ້ວ ກ່ອນທຸກສິ່ງທຸກຢ່າງຈະເກີດຂຶ້ນ 2)ພຣະເຈົ້າເປັນຜູ້ສ້າງທຸກສິ່ງທຸກຢ່າງ ພຣະອົງເປັນຜູ້ສ້າງ ພຣະອົງບໍ່ແມ່ນເປັນພຣະເຈົ້າທີ່ມະນຸດສ້າງຂຶ້ນ, ແຕ່ງຕັ້ງຂຶ້ນ, ສົມມຸດຂຶ້ນ, ປັ້ນຫລືຫລໍ່ຂຶ້ນ, ພຣະອົງມີຢູ່ກ່ອນແລ້ວກ່ອນທີ່ທຸກສິ່ງຈະເກີດຂຶ້ນມາ.

### 2. ນິຣະມິດ:

ພຣະເຈົ້າສ້າງສິ່ງຕ່າງໆດ້ວຍການນິຣະມິດ (ຍົກເວັ້ນແຕ່ມະນຸດເຮົາ ຊຶ່ງເຮົາຈະສຶກສາເຣື່ອງນີ້ພາຍຫລັງ) ການນິຣະມິດຄືການສ້າງຂຶ້ນມາຈາກຄວາມຫວ່າງເປົ່າ ພຣະອົງພຽງແຕ່ສັ່ງ ທຸກຢ່າງກໍໄດ້ເກີດຂຶ້ນຕາມຄໍາສັ່ງຂອງພຣະອົງ.

## 3. <u>ພຣະເຈົ້າສ້າງສິ່ງໃດແດ່ໃນແຕ່ລະມື້:</u>

ຄວາມຫມາຍຂອງຄຳວ່າ "ມື້" ປະຈຸບັນນີ້ເຮົາຖືວ່າມື້ນຶ່ງມີ 24 ຊົ່ວໂມງຄືໂລກຫມູນຮອບມັນເອງ 1 ຮອບ, ດ້ານນຶ່ງອວ່າຍໃສ່ຕາເວັນເປັນກາງເວັນປະມານ12 ຊົ່ວໂມງ ແລະອີກດ້ານນຶ່ງອວ່າຍໜີຈາກຕາເວັນເປັນກາງຄືນປະມານ12 ຊົວໂມງລວມກັນເປັນ 24 ຊົ່ວໂມງ ຫລື 1 ມື້. ຕາມລຳດັບການສ້າງໃນພຣະທັມປະຖົມການພຣະເຈົ້າບໍ່ໄດ້ສ້າງຕາເວັນແລະເດືອນເປັນເຄື່ອງກຳນົດກາງເວັນແລະກາງຄືນຈົນຮອດມື້ທີ 4. ດັ່ງນັ້ນຄຳວ່າ "ມື້" ທີ່ໃຊ້ໃນພຣະຄັມພີຕອນນີ້ຈຶ່ງອາດຈະບໍ່ແມ່ນມື້ແບບ 24 ຊົ່ວໂມງກໍເປັນໄດ້ ຫລືອາດເປັນລະຍະເວລາ ຮ້ອຍ, ໝື່ນ, ແສນ , ຫລື ຫລາຍລ້ານປີກໍເປັນໄດ້ ແຕ່ເຮົາກໍຮູ້ແນ່ນອນວ່າພຣະເຈົ້າຊົງເປັນພຣະຜູ້ສ້າງ. ເຣື່ອງການນັບມື້ນີ້ ຖ້າຈະນັບຕາມມື້ແບບ 24 ຊົ່ວໂມງໂລກຂອງເຮົາກໍຈະມີອາຍຸບໍ່ເກີນ 1 ໝື່ນປີ ຊຶ່ງນັກທໍຣະນີວິທະຍາໄດ້ອະທິບາຍຈາກການສຶກສາເບິ່ງຊັ້ນຫີນຂອງໂລກເຮົາ ໄດ້ສັນນິຖານວ່າມີອາຍຸຢ່າງນ້ອຍ 5 ລ້ານປີ ດັ່ງນັ້ນຈຶ່ງມີແນວໂນ້ມວ່າ "ມື້" ໃນພຣະຄັມພີຕອນນີ້ບໍ່ແມ່ນມື້ແບບ 24 ຊົ່ວໂມງຕາມທີ່ພວກເຮົາໃຊ້ຢູ່ທຸກວັນນີ້.

ມື້ທີ 1 ພຣະເຈົ້າສ້າງຄວາມແຈ້ງ ຫລືຄວາມສວ່າງ ພຣະເຈົ້າກ່າວວ່າ "ຈົ່ງເກີດຄວາມສວ່າງ ຄວາມສວ່າງກໍເກີດຂຶ້ນ ພຣະອົງຊົງແຍກຄວາມສວ່າງອອກຈາກຄວາມມືດ.

ມື້ທີ 2 ພຣະເຈົ້າສ້າງຟ້າ.

ມື້ທີ 3 ພຣະເຈົ້າສ້າງແຜ່ນດິນ, ທະເລ, ຕົ້ນໄມ້ແລະພືດພັນຕ່າງໆ.

ມື້ທີ 4 ພຣະເຈົ້າສ້າງ ຕາເວັນ, ເດືອນແລະດາວ.

ມື້ທີ 5 ພຣະເຈົ້າສ້າງ ສັດນ້ຳແລະນົກ.

ມື້ທີ 6 ພຣະເຈົ້າສ້າງສັດໃຊ້ງານ, ສັດເລືອຄານ, ສັດປ່າ, ແລະສ້າງມະນຸດ.

## 4. <u>ພຣະເຈົ້າແລະວິວັດທະນາການ:</u>

ສາສດາຈານ ອີ. ເອຊ. ແອນດຣູ ນັກວິທຍາສາດທີ່ມີຊື່ສຽງຊາວອັງກິດແລະເປັນຄຣິສຕຽນທີ່ຮັກພຣະເຈົ້າມີຄວາມເຊື່ອທີ່ສອດຄ່ອງກັບພຣະຄັມພີ, ທ່ານເປັນສາສດາຈານ ວິຊາຟີສິກສ໌ ທີ່ມຫາວິທຍາລັຍລອນດອນ ທ່ານກ່າວໄວ້ໃນປຶ້ມເຣື່ອງພຣະເຈົ້າແລະວິວັດທະນາການຕອນນຶ່ງວ່າ ວິວັດທະນາການບໍ່ສາມາດອະທິບາຍທຸກສິ່ງໄດ້, ບໍ່ສາມາດບອກໄດ້ວ່າກົດແຫ່ງວິທຍາສາດມາຈາກໃສ ແລະບໍ່ສາມາດອະທິບາຍໄດ້ວ່າດາວນົບພະເຄາະຕ່າງໆ ແລະດວງດາວທັງປວງ ( ຊຶ່ງລວມກັນແລ້ວເຮົາເອີ້ນວ່າຈັກກະວານ) ນີ້ ຕົ້ນເດີມມາຈາກໃສ. ວິວັດທະນາການອະທິບາຍເຣື່ອງຄວາມດີ, ຄວາມຮັກ, ຄວາມສວຍງາມ, ມິຕພາບແລະຄວາມຍຸດຕິທັມບໍ່ໄດ້. ມັນບໍ່ສາມາດຮູ້ສິ່ງດີສິ່ງຊົ່ວຫລືສາມາດເລືອກອັນໃດອັນນຶ່ງໄດ້. ສຸດທ້າຍວິວັດທະນາການບໍ່ສາມາດບອກໄດ້ວ່າເມື່ອຕາຍແລ້ວຈະໄປໃສ ນອກຈາກບອກໄດ້ພຽງແຕ່ວ່າ "ບໍ່ມີບ່ອນໃດ" ຊຶ່ງຄຳຕອບເຊັ່ນນີ້ເຮົາກໍຮູ້ຢູ່ໃນສ່ວນເລິກຂອງຈິດໃຈເຮົາເອງວ່າເປັນຄຳຕອບທີ່ຜິດ.

## 5. <u>ການສ້າງມະນຸດ:</u>

1. ສ້າງຕາມພຣະລັກສະນະຂອງພຣະເຈົ້າໝາຍຄວາມວ່າມະນຸດແຕກຕ່າງຈາກສັດ ຄືມີວິນຍານ, ມີຄວາມຮູ້ສຶກນຶກຄິດຖ້າປາສຈາກພຣະລັກສະນະຂອງພຣະເຈົ້າມະນຸດກໍຈະເປັນເໝືອນສັດ ຂໍ້ 26
2. ໃຫ້ມີອຳນາດປົກຄອງສັດທັງຫລາຍ ພຣະເຈົ້າສ້າງມະນຸດໃຫ້ມີຄ່າສູງສິ່ງກວ່າສັດຢ່າງຫາອັນປຽບບໍ່ໄດ້ ບໍ່ພຽງແຕ່ເທົ່ານັ້ນມະນຸດຍັງເປັນຜູ້ປົກຄອງຝູງສັດທັງຫລາຍອີກດ້ວຍ ຂໍ້ 28-30
3. ມະນຸດຖືກສ້າງຂຶ້ນດ້ວຍພິທີກັມພິເສດ ມະມຸດຜູ້ຊາຍຖືກປັ້ນຂຶ້ນດ້ວງຝຸ່ນຂີ້ດິນ, ພຣະເຈົ້າໄດ້ເປົ່າລົມເຂົ້າທາງດັງມະນຸດຈຶ່ງມີຊີວິດ ປົດທີ 2 ຂໍ້ 7 ມະນຸດຜູ້ຍິງສ້າງຂຶ້ນຈາກກະດູກຂ້າງຂອງຜູ້ຊາຍ ປົດທີ 2 ຂໍ້ 21-23

## 6. <u>ມະນຸດກັບສັດແຕກຕ່າງກັນ</u>:

ບາງສາສນາສອນວ່າມະນຸດເປັນສັດຊະນິດນຶ່ງທີ່ຕ້ອງວຽນຕາຍວຽນເກີດ ແລະຍັງສອນອີກວ່າຄົນທີ່ຕາຍໄປແລ້ວອາດຈະກັບມາເກີດເປັນສັດ. ແຕ່ພຣະຄັມພີຂອງພຣະເຈົ້າບໍ່ໄດ້ສອນແບບນັ້ນ ມະນຸດກັບສັດແຕກຕ່າງກັນດັ່ງນີ້:

**<u>ມະນຸດ</u>:**

1) ຍ່າງໄປມາໄດ້ດ້ວຍຂາສອງຂ້າງ 2)ໃຊ້ນີ້ວມືຈັບສິ່ງຂອງປິ່ນໄປມາໄດ້ 3)ສມອງໃຫຍ່ກວ່າສັດຖ້າຈະປຽບທຽບກັບຂນາດຂອງຮ່າງກາຍ ແລະມີຄວາມສລັບຊັບຊ້ອນກວ່າ 4)ສມາດໃຊ້ໄຟໃຫ້ເປັນປໂຍດ 5)ປະດິດເຄື່ອງມືເຄື່ອງໃຊ້ໄດ້ 6) ສາມາດພັດທະນາມີຄວາມຮູ້ຄວາມສາມາດ 7)ມີພາສາຕິດຕໍ່ກັນໄດ້ໂດຍຊຽນເປັນໂຕໜັງສື

**<u>ສັດ</u>:** 1) ຍ່າງໂຕຊື່ດ້ວຍຂາ 2 ຂ້າງບໍ່ໄດ້ 2)ໃຊ້ນີ້ວມືຈັບສິ່ງຂອງປິ່ນໄດ້ບໍ່ຄ່ອງແຄ້ວຫລືເຮັດບໍ່ໃດ້
3) ສມອງນ້ອຍບໍ່ສລັບຊັບຊ້ອນ 4) ຢ້ານໄຟແລະມັກແລ່ນຜ່າຍໄຟ
5) ປະດິດເຄື່ອງມືເຄື່ອງໃຊ້ຕ່າງໆ ບໍ່ໄດ້ 6) ບໍ່ມີການພັດທະນາຄວາມຮູ້ຄວາມສາມາດເຖິງວ່າມີກໍມີໜ້ອຍ. 7) ອາດຈະຕິດຕໍ່ກັນດ້ວຍສຽງ ແຕ່ບໍ່ມີພາສາເປັນໂຕໜັງສື

## 7. <u>ວັນສະບາໂຕ</u>:

ຕາມຄວາມໝາຍໃນພາສາເຮັບເຣີ ຊຶ່ງເປັນພາສາດັ້ງເດີມຂອງພຣະຄັມພີເດີມແປວ່າ”ຢຸດພັກ” ພຣະເຈົ້າສ້າງສິ່ງຕ່າງໆພາຍໃນ 6 ວັນ ແລະໃນວັນທີເຈັດພຣະອົງພັກຜ່ອນ ປະເພນີແລະຂໍ້ບັນຍັດຕາມຄວາມຄິດຂອງມະນຸດໄດ້ເຮັດໃຫ້ວັນສະບາໂຕກາຍເປັນວັນທີ່ແບກພາຣະໜັກ ແທນທີ່ຈະພັກຜ່ອນ. ເມື່ອພຣະເຢຊູສະເດັດມາພຣະອົງຊີ້ໃຫ້ເຫັນວ່າການກະທຳເຊັ່ນນັ້ນຜິດພຣະປະສົງຂອງພຣະເຈົ້າ ເຊັ່ນ ງົວຕົກສ້າງຈະດຶງຂຶ້ນກໍບໍ່ໄດ້, ຈະປິ່ນປົວຮັກສາຄົນປ່ວຍໃນວັນສະບາໂຕກໍບໍ່ໄດ້ ອ່ານມັດທາຍ 12:1-13; ລູກາ13:10-17; 3 ໂຢຮັນ 5:16-18 ປະຈຸບັນນີ້ກໍຍັງມີຜູ້ທີ່ອ້າງຕົນວ່າເຊື່ອພຣະເຈົ້າ. ບາງກຸ່ມສອນວ່າຕ້ອງນະມັສການພຣະເຈົ້າໃນວັນສະບາໂຕເທົ່ານັ້ນແຕ່ຂໍ້ພຣະຄັມພີດັ່ງຕໍ່ໄປນີ້ຈະຊີ້ໃຫ້ເຮົາຮູ້ວ່າຄວາມຈິງເປັນຢ່າງໃດ.

1. ການສິ້ນພຣະຊົນຂອງພຣະເຢຊູເຮັດໃຫ້ຄໍາສັນຍາເດີມຍົກເລີກໄປ ໂຣມ 7:6,8, 1-3; 10:4, ໂກໂລຊາຍ 2:14
2. ຄຣິສຕຽນພົ້ນຈາກການເປັນທາດ ຄາລາເຕັຽ 4:8-11; ໂກໂລຊາຍ 16
3. ພຣະເຢຊູເປັນຄືນມາຈາກຕາຍໃນວັນອາທິດ ; ໂຢຮັນ 20:1-19; ກິຈການ 20:7; 1 ໂກຣິນໂທ 16:2 ; ພຣະນິມິດ 1:10

**ຂໍ້ທ່ອງຈໍາ**:

ເຫດສະນັ້ນເມື່ອເຮົາເປັນເຊື້ອສາຍຂອງພຣະເຈົ້າແລ້ວເຮົາກໍບໍ່ຄວນຖືວ່າພຣະເຈົ້າເປັນຄໍາ, ເງິນ, ຫລືຫີນ. ເປັນສິລປະ ແລະເປັນພຣະເຈົ້າຕາມຄວາມຄິດຂອງມະນຸດ ກິຈການ 18:29

**ຂໍ້ຄວນຈື່ຈໍາ**:

ພຣະຄັມພີສອນວ່າພຣະເຈົ້າສ້າງທຸກສິ່ງ ການສ້າງນີ້ໃຊ້ເວລາດົນປານໃດ? ຫລືສ້າງດົນປານໃດກໍບໍ່ສໍາຄັນ, ແຕ່ຄວາມສໍາຄັນນັ້ນຄືພຣະເຈົ້າເປັນ "ພຣະຜູ້ສ້າງ."

**ພາກປະຕິບັດ**:

ຈົ່ງຕອບຄໍາຖາມຕໍ່ໄປນີ້ ຂ້າພະເຈົ້າຄວນດໍາເນີນຊີວິດຢ່າງໃດເພື່ອໃຫ້ເໝາະສົມກັບວ່າຕົນມີຄວາມສໍາຄັນແລະມີຄ່າທີ່ສຸດໃນບັນດາສິ່ງທັງປວງທີ່ພຣະເຈົ້າສ້າງຂຶ້ນມາ?

1..........................................................................................................................

2..........................................................................................................................

ຂຽນຊື່................................................................ ວັນທີ.........................

______✞______

*ຮຽບຮຽງ: ໄພສານ ສົມສິດທ໌*

# ບົດທີ 4

## ພຣະສັນຍາຂອງພຣະເຈົ້າ

**ເປົ້າຫມາຍ:** ເພື່ອໃຫ້ຜູ້ຮຽນໄດ້ຮູ້ວ່າພຣະເຈົ້າໄດ້ສັນຍາວ່າຈະຊ່ວຍມະນຸດໃຫ້ລອດພົ້ນ. ແຕ່ມີເງື່ອນໄຂຢູ່ວ່າມະນຸດຈະຕ້ອງເຊື່ອຟັງແລະຮັກສາພຣະບັນຍັດຂອງພຣະອົງ

**ຂໍ້ພຣະຄັມພີ:** ປະຖົມການ 12:1-3, 15:18-21, 17:2-8; ກິຈການ 3:25

**ພຣະເຈົ້າບໍ່ບັງຄັບຜູ້ໃດ:**

ພຣະເຈົ້າບໍ່ໄດ້ໃຊ້ວິທີບັງຄັບເພື່ອໃຫ້ມະນຸດກະທຳຕາມພຣະບັນຍັດຂອງພຣະອົງເໝືອນຜູ້ມີອຳນາດບາດໃຫຍ່ທົ່ວໄປ ທີ່ໃຊ້ອຳນາດແລະອິດທິພົນບີບບັງຄັບໃຫ້ຜູ້ອື່ນເຮັດຕາມຄຳສັ່ງຂອງຕົນ. ແຕ່ພຣະເຈົ້າຊົງສັນຍາວ່າພຣະອົງຈະອວຍພອນໃຫ້ ຖ້າມະນຸດຫາກເຊື່ອຟັງແລະຮັກສາພຣະບັນຍັດທີ່ພຣະອົງຊົງປະທານໃຫ້.

**1. ຄວາມເປັນມາຂອງພຣະສັນຍາ:**

ໃນພຣະຄັມພີເດີມພຣະເຈົ້າໄດ້ຮຽກເອີ້ນສ່ວນບຸກຄົນແລະຊົນຊາດທີ່ພຣະອົງຊົງເລືອກແລະຊົງສັນຍາວ່າຈະອວຍພອນແກ່ເຂົາ ຖ້າເຂົາກະທຳຕາມເງື່ອນໄຂທີ່ພຣະອົງຊົງວາງໄວ້.

**2. ພຣະສັນຍາຂອງພຣະເຈົ້າກັບໂນອາ:**

1) ສັນຍາວ່າຈະຊ່ອຍໃຫ້ລອດພົ້ນ ປະຖົມການ 6:18-22

2) ສັນຍາວ່າຈະອວຍພອນຖ້າຫາກ ໂນອາ ເຊື່ອຟັງພຣະອົງ ປະຖົມການ 9:1-7

ຄວາມໝາຍຂອງສັນຍາ: ສັນຍາຫມາຍເຖິງຄຳຫມັ້ນສັນຍາລະຫວ່າງ 2 ຝ່າຍຊຶ່ງປະກອບດ້ວຍ 1)ເງື່ອນໄຂ 2)ຂໍ້ຜູກມັດ 3)ຜົນທີ່ຈະໄດ້ຮັບ ເມື່ອມີການທຳສັນຍາ ກໍຈະມີການເຊັນສັນຍາປະທັບຕາມີພະຍານຫລັກຖານຕ່າງໆເພື່ອຮັບຮອງສັນຍາດັ່ງກ່າວ.

ສັນຍາຂອງພຣະເຈົ້າປະກອບດ້ວຍ: 1) ເງື່ອນໄຂ 2)ຂໍ້ຜູກພັນ 3)ພຣະພອນທີ່ພຣະເຈົ້າຈະປະທານໃຫ້ເມື່ອເຮົາກະທຳຕາມເງື່ອນໄຂແລະຂໍ້ຜູກພັນທີ່ພຣະອົງຊົງວາງໄວ້.

ແຕກຕ່າງກັນຢ່າງໃດ: ສັນຍາລະຫວ່າງພຣະເຈົ້າກັບມະນຸດມີຂໍ້ແຕກຕ່າງກັນກັບສັນຍາລະຫວ່າງມະນຸດກັບມະນຸດດັ່ງຕໍ່ໄປນີ້ 1)ບໍ່ໄດ້ປະກອບດ້ວຍຂໍ້ຕົກລົງລະຫວ່າງສອງຝ່າຍເພາະພຣະເຈົ້າເປັນຜູ້ໃຫ້ສັນຍາ ແລະມະນຸດເປັນຝ່າຍຮັບເອົາທຸກຄັ້ງ 2) ພຣະເຈົ້າເປັນຜູ້ຮັບຮອງ ( ຮັບປະກັນ) ສັນຍາແຕ່ຝ່າຍດຽວ ຫລືອີກຢ່າງ

ນຶ່ງພຣະອົງເປັນຜູ້ຮັບຜິດຊອບຕໍ່ພຣະພອນ ຫລືຜົນທີ່ເຮົາຈະໄດ້ຮັບ ຖ້າເຮົາກະທຳຕາມເງື່ອນໄຂຂອງພຣະອົງ. 3)ຕົວຢ່າງສັນຍາທີ່ພຣະເຈົ້າຊົງກະທຳກັບອັບຣາຮາມ (ເບິ່ງຂໍ້ພຣະຄັມພີຕອນຕົ້ນຂອງບົດຮຽນນີ້ )

**3. <u>ເງື່ອນໄຂທີ່ອັບຣາຮາມຕ້ອງກະທຳຕາມ</u>:**

ກ. ບອກໃຫ້ອັບຣາຮາມດຳເນີນຊີວິດໃນທາງອັນຊອບທັມຂອງພຣະເຈົ້າ 17:1

ຂ. ສັນຍາວ່າຈະໃຫ້ ອັບຣາຮາມເປັນຕົ້ນຕະກູນຂອງຊົນຊາດໃຫຍ່ 17:6

ຄ. ອັບຣາຮາມເຊື່ອຟັງ ໄດ້ພາຄອບຄົວອອກເດີນທາງຕາມການຊົງນຳຂອງພຣະເຈົ້າ 12:4

ງ. ພຣະເຈົ້າຈະຮັກສາສັນຍາຂອງພຣະອົງ ເມື່ອອັບຣາຮາມກະທຳຕາມເງື່ອນໄຂ
"ພຣະເຈົ້າບອກວ່າ ຈົ່ງ.........................ແລ້ວເຮົາຈະອວຍພອນແກ່ເຈົ້າ"

**4. <u>ພຣະເຈົ້າຊົງອວຍພອນແກ່ອັບຣາຮາມຢ່າງໃດເມື່ອລາວໄດ້ກະທຳຕາມເງື່ອນໄຂ</u> (ເຊື່ອຟັງ)**

ກ. ອວຍພອນໃຫ້ອຸດົມສົມບູນ 24:34 - 35

ຂ. ໃຫ້ມີລູກໄດ້, ແຕ່ກ່ອນເມັຽຂອງອັບຣາຮາມເປັນຫມັນ ຕໍ່ມາໄດ້ມີລູກຈົນກາຍເປັນຊົນຊາດໃຫຍ່ 24:36
ຖ້າຈະສຶກສາໃຫ້ລະອຽດ ກະຣຸນາອ່ານ 2:7,17; 13:2; 13:14

ຄ. ອັບຣາຮາມມີຄວາມໃກ້ຊິດກັບພຣະເຈົ້າໂດຍການນະມັສການພຣະອົງ, ເມື່ອລາວມີຄວາມໃກ້ຊິດກັບພຣະເຈົ້າ ລາວກໍມີຄວາມຮັກແລະເປັນຫ່ວງຄົນອື່ນ 12:7-9; 13:4

ງ. ພຣະເຈົ້າຊົງຟັງຄຳອະທິຖານໄຫວ້ວອນຂອງລາວ 18:16-13

**5. <u>ສັນຍາດັ່ງກ່າວມີຄວາມກ່ຽວຂ້ອງກັບຂາພະເຈົ້າຢ່າງໃດ</u>?**

1) ກັບອັບຣາຮາມ ເປັນສັນຍາທີ່ບໍ່ໄດ້ກະທຳກັບຄົນ ພຽງຄົນດຽວ, ເພື່ອຄົນຜູ້ດຽວ ແຕ່ເປັນຄຳສັນຍາທີ່ຜ່ານອັບຣາຮາມ ເພື່ອພຣະພອນທີ່ພຣະເຈົ້າຊົງສັນຍານັ້ນຈະສືບທອດມາເຖິງຂ້າພະເຈົ້າແລະມະນຸສໂລກ.

2) ກັບໂນອາ ເປັນສັນຍາທີ່ບໍ່ໄດ້ກະທຳກັບຄົນດຽວເປັນສ່ວນບຸກຄົນ ແຕ່ກະທຳກັບຂ້າພະເຈົ້າແລະມະນຸສໂລກໂດຍມີ ໂນອາ ເປັນຕົວແທນຂອງມະນຸສໂລກ.

**<u>ນາຍສະຖານີຣົດໄຟກັບລູກ</u>:**

ຊາຍຄົນນຶ່ງເປັນນາຍສະຖານີຣົດໄຟມີລູກຊາຍຄົນນຶ່ງອາຍຸ 4 ປີ ວັນນຶ່ງລູກໄດ້ໄປຫລິ້ນຢູ່ທາງຣົດໄຟ ພໍດີຣົດໄຟກະບວນນຶ່ງແລ່ນມາດ້ວຍຄວາມໄວສູງ ເມື່ອເຫັນເດັກນ້ອຍຈະຢຸດກໍຢຸດບໍ່ທັນ ຜູ້ເປັນພໍ່ຈະໂດດເຂົ້າໄປຊ່ອຍກໍບໍ່ທັນ ດັ່ງນັ້ນພໍ່ຈຶ່ງເອີ້ນບອກໃຫ້ລູກນອນລົງລູກກໍເຊື່ອຟັງ ເມື່ອລູກນອນລົງກັບພື້ນຣົດໄຟກໍແລ່ນຂ້າມລາວໄປໂດຍທີ່ລາວບໍ່ໄດ້ຮັບອັນຕະລາຍໃດໆ. ໃນທຳນອງດຽວກັນຖ້າເຮົາຫາກເຊື່ອຟັງພຣະເຈົ້າພຣະອົງກໍຈະຊົງພິທັກຮັກສາເຮົາ, ບໍ່ພຽງແຕ່ເທົ່ານັ້ນ ພຣະອົງຈະຊົງອວຍພອນໃຫ້ແກ່ເຮົາອີກດ້ວຍ.

**<u>ຂໍ້ທ່ອງຈຳ</u>:** ແຕ່ທ່ານທັງຫລາຍຈົ່ງເປັນຜູ້ປະພຶດຕາມຄຳສອນນັ້ນຢ່າເປັນແຕ່ຜູ້ຟັງເທົ່ານັ້ນ" ຢາໂກໂບ 1:22

**ຂໍ້ຄວນຈໍາ**: ພຣະເຈົ້າຮັກສາສັນຍາຂອງພຣະອົງສເມີ ທັງອະດີດ ປັດຈຸບັນແລະອະນາຄົດ. ຖ້າຂ້າພະເຈົ້າຍອມເຊື່ອຟັງແລະກະທໍາຕາມເງື່ອນໄຂທີ່ພຣະເຈົ້າຊົງວາງໄວ້ ພຣະອົງຊົງສັນຍາວ່າຈະສົ່ງພຣະຜູ້ໂຜດໃຫ້ພົ້ນຄືພຣະເຢຊູເຂົ້າມາໃນໂລກນີ້ ບັດນີ້ພຣະອົງກໍໄດ້ສະເດັດມາແລ້ວຕາມພຣະສັນຍາ ເຫລືອແຕ່ຝ່າຍຂ້າພະເຈົ້າທີ່ຈະເຊື່ອຟັງແລະໄວ້ວາງໃຈໃນພຣະອົງ. ພາກປະຕິບັດຕໍ່ໄປນີ້ຂ້າພະເຈົ້າຈະເລີ້ມເຊື່ອຟັງພຣະເຈົ້າຕັ້ງແຕ່ວັນນີ້ເປັນຕົ້ນໄປ

1)............................................. 2)..................................................

3)............................................. 4)..................................................

______✞______

*ຮຽບຮຽງ: ໄພສານ ສິມສິດທ໌*

# <u>ບົດຮຽນທີ 5</u>

## <u>ພຣະເຈົ້າຊົງພິພາກສາ</u>

<u>**ເປົ້າຫມາຍ**</u>: ເພື່ອໃຫ້ຜູ້ຮຽນໄດ້ຮູ້ວ່າພຣະເຈົ້າຍຸດຕິທັມແລະພຣະອົງຈະເປັນຜູ້ພິພາກສາລົງໂທດຫລືໃຫ້ບໍາເຫນັດແກ່ມະນຸດ

<u>**ຂໍ້ພຣະຄັມພີ**</u>: ພຣະບັນຍັດ 32:4; ເອຊາຢາ 45:19-21; ເອເສກຽນ 7:3; ມັດທາຍ 25:31-34

1. <u>**ພຣະເດດແລະພຣະຄຸນຂອງພຣະເຈົ້າ**</u>

ເມື່ອເຮົາເວົ້າເຖິງເຣື່ອງພຣະເຈົ້າ ເຮົາມັກຈະເວົ້າແຕ່ຄວາມຮັກແລະພຣະຄຸນຂອງພຣະອົງເທົ່ານັ້ນ ແຕ່ໃຫ້ເຮົາຈື່ໄວ້ວ່າພຣະເຈົ້າມີທັງພຣະເດດແລະພຣະຄຸນ ໃນເວລາດຽວກັນພຣະອົງຍັງພິພາກສາດ້ວຍພຣະອົງເອງ ເປັນການ ຍຸດຕິທັມ ພຣະອົງຈະບໍ່ປ່ອຍໃຫ້ຄວາມບາບລອຍນວນຢູ່ຕລອດເວລາ. ເມື່ອເຖິງຄາວກໍານົດທຸກຄົນຈະປະເຊີນກັບການພິພາກສາຢ່າງບໍ່ມີທາງຈະຫລີກລ້ຽງໄປໄດ້.

1) ໃຜແດ່ທີ່ຈະຖືກພິພາກສາ? (ມັດທາຍ 25:32 ; ໂຣມ 2:3 )

2) ການພິພາກສາມີລັກສະນະຢ່າງໃດ? ການພິພາກສາທີ່ທ່ຽງທັມ (ໂຣມ 2:5 )

3) ການພິພາກສາຄືການລົງໂທດອັນຕລອດໄປຫລືບໍ່?

   (1). ໃນບາງກໍຣະນີເປັນການພິພາກສາເພື່ອໃຫ້ເກີດຄວາມຍຸດຕິທັມ ( 1 ປະຫວັດກະສັດ 3:28 )

   (2). ເປັນການຕັດສິນໃຫ້ຮູ້ຄັກແນ່ວ່າສິ່ງໃດຫຼືຝ່າຍໃດ ຖືກຫລືຜິດ ( ມັດທາຍ 25:31-34 )

   (3). ເພື່ອເປັນການຊ່ອຍເຫລືອຄົນຊອບທັມຫລືຄົນດີ ທີ່ເສັຽປຽບຄົນອະທັມຫລືຄົນຊົ່ວ ( ເພງສັຣເສີນ 7:8-17 )

2. <u>**ພຣະເຢຊູຄຣິດແລະການພິພາກສາ**</u>

1) ພຣະອົງເປັນພຣະຜູ້ຊ່ອຍໃຫ້ພົ້ນ (ໂຢຮັນ 3:17, 12:47) ການສະເດັດເຂົ້າມາໃນໂລກເທື່ອທໍາອິດຂອງພຣະເຢຊູ ເປັນການສະເດັດມາຊ່ອຍມະນຸດໃຫ້ລອດພົ້ນຈາກຄວາມບາບ. ພຣະອົງເຕືອນໃຫ້ມະນຸດຖິ້ມຄວາມບາບຄືຖິ້ມໃຈເກົ່າເອົາໃຈໃຫມ່, ແລ້ວອວ່າຍມາຫາພຣະເຈົ້າ.

2) ພຣະອົງເປັນຜູ້ພິພາກສາ ( ມັດທາຍ 25:31- 41; ໂຢຮັນ 5:22 ,26 -30; 2ໂກຣິນໂທ 5:10; 2 ເທຊະໂລນິກ.1:7-8; 2 ຕີໂມທຽວ.4:1 )

3. <u>**ການກັບມາຄັ້ງທີສອງຂອງພຣະເຢຊູ ພຣະອົງຈະຊົງພິພາກສາມະນຸດທັງປວງ**</u>

ແມ່ນຫຍັງຈະເກີດຂຶ້ນກັບຄົນທີ່ໄດ້ຍິນຂ່າວປຣະເສີດແລ້ວບໍ່ຍອມກັບໃຈ? ຜູ້ທີ່ໄດ້ເຫັນໄດ້ຮູ້ເຣື່ອງພຣະເຢຊູແຕ່ຍັງມີໃຈແຂງກະດ້າງບໍ່ຍອມກັບໃຈໃຫມ່ຈະໄດ້ຮັບໂທດໜັກກ່ວາຄົນອື່ນ ( ມັດທາຍ 11:20-24; ມາຣະໂກ 12:40; ໂຢຮັນ 9:39-41)

ການພິພາກສາຂອງພຣະເຈົ້າຂັດກັບຄວາມຮັກແລະຄວາມບໍຣິສຸດຂອງພຣະເຈົ້າຫລືບໍ່? ດ້ວຍເຫດທີ່ພຣະເຈົ້າມີຄວາມຮັກແລະມີຄວາມບໍຣິສຸດ ພຣະອົງຈຶ່ງເສີຍເມີຍຕໍ່ຄວາມບາບບໍ່ໄດ້. ໃນວັນພິພາກສາ, ຄົນບາບແລະຄວາມບາບຈະຖືກຈັດການຢ່າງເດັດຂາດ ຍຸກປັດຈຸບັນນີ້ຍັງເປັນຍຸກແຫ່ງພຣະຄຸນ ພຣະເຈົ້າຍັງຮັກຄົນບາບແຕ່ກຽດຊັງຄວາມບາບ. ເມື່ອຜ່ານຍຸກແຫ່ງພຣະຄຸນໄປແລ້ວກໍຈະເປັນຍຸກແຫ່ງພຣະເດດ ຄົນບາບທີ່ບໍ່ຍອມກັບໃຈຈະຖືລົງໂທດຢ່າງແນ່ນອນ.

4. **<u>ຄຣິສຕຽນແລະການພິພາກສາ</u>**

ຄຣິສຕຽນເປັນຜູ້ທີ່ເຊື່ອແລະໄວ້ວາງໃຈພຣະເຢຊູຢ່າງແທ້ຈິງ, ເຂົາເຈົ້າຈະບໍ່ຖືກພິພາກສາລົງໂທດຍ້ອນຄວາມບາບ. ແຕ່ເຂົາເຈົ້າຈະຖືກພິພາກສາວ່າພວກຕົນດໍາເນີນຢູ່ຊີວິດໃນໂລກນີ້ແບບໃດ, ຈະໄດ້ຮັບບໍາເນັດຫລືຄວາມອັບອາຍ.

1) ພຣະເຢຊູຊົງຮັບໂທດແທນເຂົາເຈົ້າແລ້ວ ( ໂຣມ 3:24-26 )
2) ຊື່ຂອງເຂົາເຈົ້າໄດ້ຖືກຈົດໄວ້ໃນໜັງສືແຫ່ງຊີວິດແລ້ວ (ພຣະນິມິດ 3:5 )
3) ຈະຖືກພິພາກສາວ່າເຂົາເຈົ້າໄດ້ດໍາເນີນຊີວິດໃນໂລກນີ້ຢ່າງໃດ?( 1ໂກຣິນໂທ 3:8-15 2 ໂກຣິນໂທ 5:10 )

**<u>ຂໍ້ທ່ອງຈໍາ</u>:**

"ແຕ່ພຣະເຈົ້າຍັງສະແດງຄວາມຮັກຕໍ່ເຮົາຢູ່ ຄືໃນຂະນະທີ່ເຮົາເປັນຄົນບາບ ພຣະອົງຊົງຍອມຕາຍເພື່ອເຮົາ" ( ໂຣມ 5:8 )

**<u>ຂໍ້ຄວນຈໍາ</u>:**

ໂດຍຄວາມເຊື່ອໄວ້ວາງໃຈແລະດໍາເນີນຊີວິດຕາມຄໍາສອນຂອງພຣະເຢຊູຄຣິດ ເຮັດໃຫ້ຂ້າພຣະເຈົ້າໄດ້ຮັບ ການຍົກໂທດຄວາມຜິດບາບ ແລະໄດ້ຫລຸດພົ້ນຈາກການພິພາກສາລົງໂທດ.

**<u>ສັນຍານເຕືອນພັຍ</u>:**

ຫລາຍເທື່ອເມື່ອກະສັດອາເລັກຊານເດີ ເຂົ້າໂຈມຕີເມືອງໃດ ພຣະອົງມັກຈະໃຫ້ທະຫານແກວ່ງທຸງເຕືອນພວກຂ້າເສິກດັ່ງນີ້; ທຸງສີຂາວ ໝາຍຄວາມວ່າ ຖ້າເມືອງນັ້ນຍອມແພ້ໂດຍດີຈະໄດ້ຮັບຄວາມກະຣຸນາ, ທຸງແດງຫມາຍຄວາມວ່າ ຈະໄວ້ຊີວິດຄົນແຕ່ຈະທໍາລາຍເມືອງ, ທຸງດໍາ ໝາຍຄວາມວ່າຈະທໍາລາຍທັງຄົນແລະເມືອງ. ອຸທາຫອນນີ້, ໄດ້ສອນໃຫ້ພວກເຮົາຮູ້ວ່າໃນຂະນະທີ່ທຸງຂາວຂອງພຣະເຈົ້າຍັງແກວ່ງຢູ່ ມະນຸດຍັງມີໂອກາດທີ່ຈະຖິ້ມໃຈເກົ່າເອົາໃຈໃຫມ່, ແລະປະຖິ້ມຄວາມບາບ. ແຕ່ຖ້າທຸງດໍາຖືກດຶງຂຶ້ນສູ່ປາຍເສົາຍາມໃດ ມະນຸດຈະບໍ່ມີໂອກາດ ຫລືຈະບໍ່ໄດ້ຮັບ ຄວາມກະຣຸນາຈາກພຣະເຈົ້າອີກຕໍ່ໄປ

**<u>ພາກປະຕິບັດ</u>:**

ຂ້າພະເຈົ້າ...........................................ຂໍສັນຍາວ່າຈະຮັບພຣະເຢຊູເປັນພຣະຜູ້ຊ່ອຍໃຫ້ລອດພົ້ນ, ຈະຖິ້ມໃຈເກົ່າເອົາໃຈໃຫມ່, ແລະຈະປະຖິ້ມຄວາມບາບຕັ້ງແຕ່ວັນນີ້ເປັນຕົ້ນໄປ

ຂຽນຊື່.....................................................ວັນທີ...................................

______✞______

*ຮຽບຮຽງ: ໄພສານ ສິນສິດທ໌*

# ບົດຮຽນທີ 6
## ພຣະເຈົ້າແຫ່ງຄວາມຮັກ

**ເປົ້າຫມາຍ**: ເພື່ອຊ່ອຍໃຫ້ຜູ້ຮຽນຮູ້ວ່າພຣະເຈົ້າເປັນຄວາມຮັກ, ໂດຍທາງພຣະອົງ ເຂົາເຈົ້າຈະຮຽນຮູ້ຄວາມຮັກທີ່ແທ້ຈິງ

**ຂໍ້ພຣະຄັມພີ**: 1ໂຢຮັນ 4:7-9 ; ໂຢຮັນ 3:16

**ຄວາມຮັກທີ່ພິສູດໄດ້**

ຄັ້ງນຶ່ງນານມາແລ້ວໄດ້ເກີດໄຟໄໝ້, ມີເດັກນ້ອຍຢູ່ໃນເຮືອນບໍ່ມີໃຜກ້າເຂົ້າໄປຊ່ອຍ, ແຕ່ມີຊາຍໃຈດີຜູ້ນຶ່ງແລ່ນຜ່າໄຟເຂົ້າໄປຊ່ອຍເດັກນ້ອຍອອກມາໄດ້. ເດັກນ້ອຍປອດພັຍດີແຕ່ຊາຍຄົນນັ້ນຖືກໄຟໄໝ້ທີ່ແຂນແລະມືອາການສາຫັດຫລາຍ. ເນື່ອງຈາກພໍ່ແມ່ຂອງເດັກນ້ອຍໄດ້ເສັຍຊີວິດໃນເວລາໄຟໄໝ້ ທາງອຳນາດການປົກຄອງຈຶ່ງໄດ້ປຶກສາກັນວ່າໃຜຈະເປັນຜູ້ເຫມາະສົມທີ່ຈະຮັບເອົາເດັກກຳພ້າຄົນນີ້ເປັນລູກລ້ຽງ. ເສດຖີຄົນນຶ່ງສເນີວ່າລາວຈະລ້ຽງເດັກຄົນນີ້ແລະສົ່ງເສີມໃຫ້ໄດ້ຮັບການສຶກສາເປັນຢ່າງດີ. ແຕ່ຊາຍຄົນທີ່ຊ່ອຍເດັກນ້ອຍກໍຢາກໄດ້ເດັກນ້ອຍໄປລ້ຽງຄືກັນ. ເມື່ອກັມມະການຖາມວ່າເຈົ້າມີເຄື່ອງພິສູດອັນໃດທີ່ຢືນຢັນວ່າເຈົ້າຈະໃຫ້ຄວາມສຸກແລະອະນາຄົດທີ່ດີແກ່ເດັກຄົນນີ້? ລາວຕອບວ່າ ເຖິງຂ້າພະເຈົ້າບໍ່ມີເງິນຫລາຍແຕ່ຂ້າພະເຈົ້າກໍຮັກເດັກນ້ອຍຄົນນີ້ຫລາຍ ນີ້ຄືຂໍ້ພິສູດຂອງຂ້າພະເຈົ້າ ລາວທັງເວົ້າ ທັງຍົກມືທີ່ຖືກໄຟໄໝ້ເປັນບາດອັນສາຫັດໃຫ້ທີ່ປະຊຸມເບິ່ງ. ພຣະເຢຊູຄຣິດກໍເຊັ່ນດຽວກັນ, ພຣະອົງຮັກມະນຸດຈົນໄດ້ສະເດັດເຂົ້າມາໃນໂລກນີ້ ໄດ້ທົນທຸກທໍຣະມານ, ເປັນບາດແຜຍ້ອນຖືກຄຶງທີ່ພຣະຫັດ, ພຣະບາດ, ແລະແລະທີ່ສີຂ້າງ ຈົນໃນທີ່ສຸດພຣະອົງໄດ້ຍອມຕາຍເພື່ອມະນຸດທັງປວງ.

**1. ຄວາມຮັກຂອງພຣະເຈົ້າເປັນຄວາມຮັກທີ່ບໍ່ມີເງື່ອນໄຂ**

ໂຣມ 5:8; ເອເຟໂຊ 1:4,2, 4-5; 1ໂຢຮັນ 4:10

1)ພຣະອົງຊົງຮັກມະນຸດ, ພຣະອົງຊົງຮັກມະນຸດບໍ່ແມ່ນຍ້ອນຄຸນງາມຄວາມດີຂອງເຂົາ.

2)ພຣະອົງຊົງຮັກແລະໃຫ້ໂອກາດແກ່ມະນຸດ, ແຕ່ເຂົາໄດ້ປະຕິເສດພຣະອົງ

3)ເປັນຄວາມຮັກທີ່ແຕກຕ່າງກັບຄວາມຮັກຂອງມະນຸດ, ມະນຸດຮັກກັນມີເງື່ອນໄຂຫຼືຫວັງຜົນປໂຍດຕ່າງໆຈາກກັນ, ມະນຸດຮັກກັນຍ້ອນຄວາມງາມ, ຄວາມຮັ່ງມີ, ມີຖານະດີ, ມີຄວາມເຂົ້າໃຈກັນ. ແຕ່ຄວາມຮັກຂອງພຣະເຈົ້າບໍ່ໄດ້ຢູ່ໃນສິ່ງທີ່ກ່າວມານີ້ ພຣະອົງຊົງດຳຣົງຢູ່ໄດ້ໂດຍບໍ່ຕ້ອງເພິ່ງມະນຸດ, ມະນຸດບໍ່ມີປໂຍດອັນໃດສຳຫລັບພຣະອົງ ແຕ່ເຖິງປານນັ້ນ ພຣະອົງກໍຍັງຊົງຮັກເຂົາທັງຫຼາຍຢູ່.

**2. ຄວາມຮັກຂອງພຣະເຈົ້າສະແດງອອກທາງພຣະເຢຊູຄຣິດ**

ມັດທາຍ 14:14; ມາຣະໂກ 10:21; ລູກາ 7:23; ຄາລາເຕັຽ 2:20; ເອເຟໂຊ 2:4-7,5, 25

1)ພຣະເຢຊູຊົງຊ່ອຍເຫລືອຮັບໃຊ້ຄົນອື່ນ

2)ຊົງເສັຽສະລະຄວາມສຸກໃນສວັນ, ມາກຳເນີດເກີດເປັນມະນຸດເພື່ອຊ່ອຍມະນຸດທັງປວງ.

3)ພຣະອົງຊົງສິ້ນພຣະຊົນແທນຄົນບາບເທິງໄມ້ກາງແຂນ

<u>ພຣະເຈົ້າຊົງເປັນຄວາມຮັກ</u>

ຄວາມຮັກເປັນລັກສະນະຢ່າງນຶ່ງຂອງພຣະເຈົ້າ. ພຣະຄັມພີບອກເຮົາວ່າ "ພຣະເຈົ້າຊົງເປັນຄວາມຮັກ" ພຣະຣາຊກິດທີ່ພຣະອົງຊົງກະທຳ, ຄຳສັ່ງສອນທຸກຄຳຂອງພຣະອົງ ລ້ວນແລ້ວແຕ່ເປັນການສະແດງຄວາມຮັກອັນໃຫຍ່ຫຼວງຂອງພຣະອົງທີ່ມີຕໍ່ມະນຸດ ( 1 ໂຢຮັນ 4:8, 16 )

## 3. <u>ຄວາຮັກ, ການພິພາກສາ, ແລະການຕີສອນຂອງພຣະເຈົ້າ</u>

ຄົນຈຳນວນຫຼາຍສົງສັຍໃນຄວາມຮັກຂອງພຣະເຈົ້າ ເມື່ອເຂົາເຈົ້າອ່ານພຣະຄັມພີເຖິງເລື່ອງການພິພາກສາແລະການຕີສອນຂອງພຣະອົງ ກ່ອນທີ່ການພິພາກສາລົງໂທດຈະມາເຖິງ. ດ້ວຍຄວາມຮັກຂອງພຣະອົງ ພຣະອົງໄດ້ຊົງຕຽມທາງອອກຫຼືທາງລອດພົ້ນໄວ້ແລ້ວ ໂດຍການສະເດັດເຂົ້າໃນໂລກບັງເກີດເປັນມະນຸດ, ຕາຍເພື່ອມະນຸດ, ແລະຮັບໂທດແທນເຂົາ. ດັ່ງນັ້ນການທີ່ຄົນໃດຄົນນຶ່ງຖືກພິພາກສານັ້ນ ບໍ່ແມ່ນພຣະເຈົ້າໝົດຄວາມຮັກໃນຕົວລາວ ແຕ່ເປັນຍ້ອນວ່າລາວບໍ່ຍອມຮັບຄວາມຮັກແລະທາງລອດພົ້ນທີ່ພຣະອົງຊົງຕຽມໄວ້ໃຫ້. ການຕີແລະສອນເປັນວິທີຂອງພຣະເຈົ້າທີ່ໃຊ້ເພື່ອເຕືອນຜູ້ທີ່ພຣະອົງຮັກບໍ່ໃຫ້ເດີນໄປໃນທາງຜິດ, ບໍ່ແມ່ນເປັນການຕີໃຫ້ຕາຍຫຼືຕີເພື່ອທຳລາຍ "*ເພາະວ່າອົງພຣະຜູ້ເປັນເຈົ້າຊົງຕີສອນຜູ້ທີ່ພຣະອົງຊົງຮັກ ແລະເມື່ອພຣະອົງຮັບຜູ້ໃດເປັນລູກ ພຣະອົງກໍຊົງຂ້ຽນສອນຜູ້ນັ້ນ*"( ເຮັບເຣີ 12:6 )

## 4. <u>ມະນຸດຄວນຕອບສນອງຄວາມຮັກຂອງພຣະເຈົ້າຢ່າງໃດ?</u>

ມັດທາຍ 22:37-40 ໂຢຮັນ 13:34-35

1) ຮັກພຣະເຈົ້າດ້ວຍສຸດຈິດສຸດໃຈແລະສຸດກຳລັງຄວາມຄິດ, ດ້ວຍເຫດນີ້ເຮົາຕ້ອງຮັກພຣະເຈົ້າກ່ອນເພາະວ່າພຣະເຈົ້າຊົງເປັນຄວາມຮັກ. ເມື່ອເຮົາຮຽນຮູ້ທີ່ຈະຮັກພຣະເຈົ້າ ເຮົາກໍຈະຮູ້ວ່າຄວາມຮັກແທ້ເປັນຢ່າງໃດ ຫລັງຈາກນັ້ນເຮົາກໍສາມາດຮັກຜູ້ອື່ນໄດ້ດ້ວຍຄວາມຮັກແບບບໍ່ມີເງື່ອນໄຂຜູກມັດແລະບໍ່ເຫັນແກ່ໂຕ.
2) ຮັກເພື່ອນບ້ານເໝືອນຮັກຕົນເອງ, ເພື່ອນບ້ານບໍ່ແມ່ນພຽງແຕ່ຄົນທີ່ຢູ່ໃກ້ເຮືອນເຮົາເທົ່ານັ້ນ ແຕ່ໝາຍເຖິງເພື່ອນມະນຸດທຸກຄົນຢູ່ໃນໂລກນີ້.
3) ຄວາມຮັກຕໍ່ກັນແລະກັນເປັນສັນຍາລັກຂອງຜູ້ທີ່ເຊື່ອແລະໄວ້ວາງໃຈໃນພຣະເຢຊູຄຣິດ ພຣະເຢຊູຊົງຕັດວ່າ "ຄົນທັງປວງຈະຮູ້ໄດ້ວ່າເຈົ້າເປັນສາວົກຂອງເຮົາ ເມື່ອເຈົ້າຮັກຊຶ່ງກັນແລະກັນ."

**<u>ຂໍ້ທ່ອງຈຳ</u>**: "ເພາະວ່າພຣະເຈົ້າຊົງຮັກໂລກຈົນໄດ້ປະທານພຣະບຸດອົງດຽວຂອງພຣະອົງເພື່ອທຸກຄົນວາງໃຈໃນພຣະບຸດນັ້ນຈະບໍ່ຈິບຫາຍແຕ່ມີຊີວິດອັນຕລອດໄປເປັນນິດ. ( ໂຢຮັນ 3:16 )

**<u>ຂໍ້ຄວນຈໍາ</u>**: ພຣະເຈົ້າແລະຄວາມຮັກເປັນສິ່ງທີ່ແຍກກັນບໍ່ອອກ, ທັງສອງສິ່ງນີ້ເບິ່ງບໍ່ເຫັນດ້ວຍຕາແລະສັມຜັດຈັບຕ້ອງບໍ່ໄດ້, ແຕ່ຮູ້ສຶກແລະເຫັນອາການ ຫລືປາກົດການໄດ້.

**<u>ພາກປະຕິບັດ</u>**: ໃຫ້ນັກຮຽນ ຕື່ມຂໍ້ຄວາມໃສ່ຊອງຫວ່າງແລ້ວອ່ານອອກສຽງດັງໆ ວ່າ..."ເພາະວ່າພຣະເຈົ້າຮັກ..............ຈົນໄດ້ປະທານພຣະບຸດອົງດຽວຂອງພຣະອົງ ເພື່ອ..................ທີ່ວາງໃຈໃນພຣະບຸດນັ້ນບໍ່ຈິບຫາຍແຕ່ມີຊີວິດອັນຕລອດໄປເປັນນິດ.

______✞______

*ຮຽບຮຽງ: ໄພສານ ສິມສິດທ໌*

# ບົດຮຽນທີ 7

## ພຣະເຈົ້າກັບຄວາມລອດພົ້ນ

**ເປົ້າໝາຍ**: ເພື່ອໃຫ້ທ່ານຮູ້ວ່າທາງລອດພົ້ນໃນທາງອື່ນບໍ່ມີ, ນອກຈາກທາງລອດພົ້ນທີ່ພຣະເຈົ້າຊົງຈັດຕຽມໄວ້ໃຫ້ເທົ່ານັ້ນ.

**ຂໍ້ພຣະຄັມພີ**: ໂຢຮັນ 3:16; ກິຈການ 4:12, 2,11; ໂຣມ 10:13.

**ຜູ້ຊ່ອຍຫລືຜູ້ສອນ**:

ຊາຍຄົນນຶ່ງລອຍນໍ້າບໍ່ເປັນ, ລາວໄດ້ຕົກນໍ້າແລະກໍາລັງຈະຈົມນໍ້າຕາຍ. ຄົນທີ່ຢູ່ແຄມຝັ່ງຫລາຍຄົນພະຍາຍາມສອນວິທີລອຍນໍ້າໃຫ້ແກ່ລາວ, ບາງຄົນບອກລາວໃຫ້ເອົາມືກວັກນໍ້າ, ບາງຄົນໄດ້ເອີ້ນໃສ່ເພື່ອໃຫ້ກໍາລັງໃຈແກ່ລາວ. ແຕ່ແທນທີ່ຈະເປັນການຊ່ອຍເຫຼືອຊາຍຄົນນັ້ນ ລາວແຫ່ງຈົມລົງໄປອີກ. ແຕ່ໃນທັນໃດນັ້ນກ່ອນທີ່ລາວຈະຈົມນໍ້າຕາຍ ກໍມີຊາຍອີກຄົນນຶ່ງແລ່ນຜ່າຝູງຄົນເຂົ້າມາພ້ອມກັບຂອນໄມ້ ທ່ອນນຶ່ງ, ລາວໄດ້ໂດດລົງໄປໃນນໍ້າເອົາຂອນໄມ້ທ່ອນນັ້ນໃຫ້ຊາຍທີ່ຈະຈົມນໍ້າຕາຍຈັບແລະພາລາວລອຍເຂົ້າຝັ່ງດ້ວຍຄວາມປອດພັຍ. ມະນຸດເຮົາກໍຕົກຢູ່ໃນສະພາບດຽວກັບຊາຍທີ່ລອຍນໍ້າບໍ່ເປັນ, ເມື່ອກໍາລັງຕົກນໍ້າກໍຕ້ອງການ "ຜູ້ຊ່ອຍ" ບໍ່ແມ່ນ "ຜູ້ສອນ" ຫຼືຄຣູ, ຫຼືສາສດາຈານ ຊຶ່ງພຽງແຕ່ເປັນຜູ້ສອນເທົ່ານັ້ນ.

1. **ຄໍາສອນເຣື່ອງຄວາມລອດພົ້ນໃນພຣະຄັມພີເດີມ**: ປະຖົມການ 3:15

ພຣະຄັມພີຕອນນີ້ເປັນຄໍາສັນຍາຂອງພຣະເຈົ້າ ທີ່ສັນຍາວ່າຈະມີພຣະຜູ້ຊ່ອຍໃຫ້ລອດພົ້ນເກີດຈາກຜູ້ຍິງແລະຈະທໍາລາຍອໍານາດຂອງມານຊາຕານ ທີ່ຫລອກລວງໃຫ້ມະນຸດເປັນກະບົດຕໍ່ສູ້ກັບພຣະເຈົ້າ, ເອຊາຢາ 53:5 ພຣະຄັມພີຕອນນີ້ເປັນຄໍາທໍານວາຍ ບອກໃຫ້ຮູ້ລ່ວງໜ້າວ່າ ພຣະເຢຊູຄຣິດຈະສະເດັດມາໃນໂລກນີ້ເພື່ອຮັບເອົາຄວາມທຸກທໍຣະມານແທນມະນຸດ, ຮັບໂທດແລະຄວາມຜິດບາບທີ່ມະນຸດສົມຄວນຈະໄດ້ຮັບ.

2. **ຄໍາສອນເຣື່ອງຄວາມລອດພົ້ນໃນພຣະຄັມພີໃໝ່**: ມັດທາຍ 1:21

ທູດສວັນໄດ້ປາກົດແກ່ນາງມາຣີອາເພື່ອແຈ້ງຂ່າວໃຫ້ນາງຮູ້ວ່າ ນາງຈະມີບຸດໂດຍຣິດເດດຂອງພຣະວິນຍານບໍຣິສຸດ ແລະໃຫ້ຕັ້ງຊື່ບຸດນັ້ນວ່າ "ເຢຊູ" ຊຶ່ງໝາຍຄວາມວ່າພຣະຜູ້ຊ່ອຍໃຫ້ລອດ ພົ້ນ, ໂຣມ 10:9. ພຣະຄັມພີຂໍ້ນີ້ໄດ້ບອກເຖິງເງື່ອນໄຂແຫ່ງຄວາມລອດພົ້ນໄວ້ດັ່ງນີ້ :

ກ. ຮັບດ້ວຍປາກວ່າພຣະເຢຊູຊົງແມ່ນອົງພຣະຜູ້ເປັນເຈົ້າ.

ຂ. ເຊື່ອດ້ວຍໃຈວ່າພຣະເຈົ້າຊົງໄດ້ບັນດົນໃຫ້ພຣະອົງເປັນຄືນມາຈາກຄວາມຕາຍ.

3. **ລັກສະນະຂອງຜູ້ທີ່ໄດ້ຮັບຄວາມລອດພົ້ນແລ້ວ**: 2 ໂກຣິນໂທ 5:17

1) ຄົນທີ່ຢູ່ໃນພຣະຄຣິດຄືຄົນທີ່ເຊື່ອ, ໄວ້ວາງໃຈ, ແລະດຳເນີນຊີວິດໃນທາງຂອງພຣະເຈົ້າ

2) ເມື່ອລາວໄດ້ກະທຳສິ່ງນັ້ນແລ້ວລາວກໍຈະກາຍເປັນຄົນທີ່ຖືກສ້າງຂຶ້ນໃໝ່

3) ຊີວິດເກົ່າ, ນິສັຍເກົ່າ, ທີ່ຮັກຄວາມບາບຄວາມຊົ່ວ, ກໍລ່ວງພົ້ນໄປ

4) ກາຍເປັນສິ່ງໃໝ່ໆ ທັງນັ້ນ, ຊີວິດຂອງລາວຈະປ່ຽນໃໝ່ຈົນໝົດສິ້ນ, ບໍ່ປ່ຽນພຽງແຕ່ບາງຢ່າງເທົ່ານັ້ນ.

<u>ຄວາມໜາຍຄຳວ່າ "ຄວາມລອດພົ້ນ"</u>

ໝາຍເຖິງ:

1. ລອດພົ້ນຈາກການພິພາກສາລົງໂທດ ຍ້ອນຄວາມຜິດບາບ
2. ຄວາມລອດພົ້ນນີ້ມາຈາກພຣະເຈົ້າ, ໂດຍທາງພຣະເຢຊູຄຣິດເທົ່ານັ້ນ
3. ຄວາມລອດນີ້ມາຈາກການຍອມສິ້ນພຣະຊົນຂອງອົງພຣະເຢຊູຄຣິດເທິງໄມ້ກາງແຂນ
4. ຄວາມລອດພົ້ນເປັນຂອງພຣະເຈົ້າທີ່ຊົງປະທານໃຫ້ແກ່ທຸກຄົນທີ່ຖິ້ມໃຈເກົ່າເອົາໃຈໃໝ່, ຖິ້ມຄວາມຜິດບາບ, ເຊື່ອແລະໄວ້ວາງໃຈໃນອົງພຣະເຢຊູຄຣິດ.

**4. <u>ອະດີດ, ປັດຈຸບັນ, ແລະອະນາຄົດ</u>:**

**<u>ອາດີດ</u>:** ພຣະເຈົ້າຊົງຍົກໂທດໃຫ້ແກ່ຜູ້ທີ່ເຊື່ອແລະໄວ້ວາງໃຈໃນພຣະອົງ, ແລະຊົງໄດ້ປະທານຊີວິດອັນຕລອດໄປເປັນນິດໃຫ້, ແລະຈະບໍ່ມີສິ່ງໃດຈະແຍກຜູ້ເຊື່ອທີ່ແທ້ຈິງອອກຈາກພຣະຄຣິດໄດ້. ໂຢຮັນ 5 ຂໍ້ 24 ;ໂຣມ 5 ຂໍ້ 1; ເອເຟໂຊ 2 ຂໍ້ 8

**<u>ປັດຈຸບັນ</u>:** ພຣະເຈົ້າຊົງຊ່ອຍຜູ້ທີ່ເຊື່ອໃນພຣະອົງໃຫ້ລອດພົ້ນຈາກອຳນາດຂອງຄວາມບາບ, ໃນແຕ່ລະວັນ ພຣະເຈົ້າຊົງຢູ່ກັບເຮົາໂດຍຊົງປະທານເຫື່ອແຮງໃຫ້ແກ່ເຮົາເພື່ອຈະມີຊັຍຊນະຕໍ່ຄວາມບາບແລະການລໍ້ລວງຂອງມານ. ໂຣມ 5:10; 1ໂກຣິນໂທ 1:18; ຟີລິບປອຍ 2:12.

**<u>ອະນາຄົດ</u>:** ໃນວັນທີ່ພຣະເຢຊູຄຣິດສະເດັດກັບມາ ຜູ້ທີ່ເຊື່ອຈະລອດພົ້ນຈາກຄວາມທໍຣະມານຝ່າຍໂລກນີ້ແລະຈະໄດ້ຢູ່ກັບພຣະເຈົ້າສືບໆໄປເປັນນິດ. 1ເທຊະໂລນິກ 5:9; ເຮັບເຣີ 9:28; 1 ເປໂຕ 1:5.

**<u>ຂໍ້ທ່ອງຈຳ</u>:**

ດ້ວຍວ່າເຮົາທັງຫຼາຍລອດພົ້ນນັ້ນກໍພົ້ນໂດຍພຣະຄຸນທາງຄວາມເຊື່ອ ບໍ່ແມ່ນເຮັດເອົາເອງ ແຕ່ວ່າພຣະເຈົ້າຊົງ ປະທານໃຫ້ລ້າໆ. ເອເຟໂຊ 2:9.

**<u>ຂໍ້ຄວນຈຳ</u>:**

ເພາະຄວາມຍຸດຕິທັມຂອງພຣະເຈົ້າ, ຜູ້ທີ່ຮັບບາບສົມຄວນໄດ້ຮັບໂທດ. ແຕ່ຍ້ອນຄວາມຮັກຂອງພຣະອົງຕໍ່ມະນຸດ ພຣະອົງຈຶ່ງໄດ້ສະເດັດເຂົ້າມາໃນໂລກນີ້ ໃນສະພາບພຣະເຢຊູຄຣິດ, ມາສິ້ນພຣະຊົນແທນ

ມະນຸດທີ່ໄມ້ກາງແຂນ, ຮັບໂທດແທນມະນຸດ.   ຂ້າພະເຈົ້າສາມາດຈະຮັບຄວາມລອດພົ້ນຊຶ່ງເປັນຜົນທີ່ມາຈາກຄວາມຮັກຂອງພຣະເຈົ້າໄດ້ ໂດຍທາງຄວາມເຊື່ອ.

<u>**ພາກປະຕິບັດ:**</u>

ກະຣຸນາຂຽນສິ່ງທີ່ທ່ານຢາກຈະຂອບພຣະຄຸນພຣະເຈົ້າຈັກ 3 ຢ່າງຫຼືຫຼາຍກ່ວານັ້ນໃສ່ຊ່ອງ ຫວ່າງຂ້າງລຸ່ມນີ້, ແລະອະທິຖານສັ້ນໆ ເພື່ອຂອບພຣະຄຸນພຣະອົງ.

1. ________________________________________________
2. ________________________________________________
3. ________________________________________________
4. ________________________________________________

ຊື່ຂອງທ່ານ: ______________________ວັນທີ: ________

_____✞_____

*ຮຽບຮຽງ: ໄພສານ ສົມສິດທ໌*

## ບົດຮຽນທີ 8

### ພຣະເຈົ້າສ້າງມະນຸດຢ່າງໃດ?

**ເປົ້າໝາຍ**: ເພື່ອໃຫ້ຜູ້ຮຽນຮູ້ວ່າມະນຸດມີຄ່າສູງສຸດໃນບັນດາສິ່ງທີ່ພຣະເຈົ້າຊົງສ້າງຂຶ້ນມາ. ພຣະເຈົ້າສ້າງມະນຸດຂຶ້ນມາຕາມພຣະລັກສະນະຂອງພຣະອົງ.

**ຂໍ້ພຣະຄັມພີ**: ປະຖົມການ 1 ຂໍ້ 26 -28 ເພງສັຣເສີນ 8:5-8 ເຮັບເຣີ 2:7-8

**ຄ່າຂອງມະນຸດ**:

ໃນສາຍຕາຂອງເຮົາ, ມົດ, ແມງໄມ້, ເປັດ, ໄກ່, ໝູ, ແລະໝາ ບໍ່ມີຄ່າຫຼາຍ ເມື່ອສົມທຽບໃສ່ຊີວິດອັນປອດພັຍຂອງມະນຸດ. ໃນສາຍພຣະເນດຂອງພຣະເຈົ້າຊຶ່ງທອດພຣະເນດລົງມາສູ່ຈັກກະວານອັນກວ້າງໃຫຍ່ໄພສານ ມະນຸດກໍປຽບເຫມືອນມົດໂຕນ້ອຍໆ ແຕ່ພຣະອົງຍັງຫ່ວງໃຍພວກເຮົາຫລາຍ. ແມ່ນແຕ່ເສັ້ນຜົມຂອງເຮົາທຸກເສັ້ນພຣະອົງຍັງຮູ້ວ່າມີຈໍານວນເທົ່າໃດ. ພຣະອົງສະເດັດເຂົ້າມາໃນໂລກ ແລະຊົງຮັບເອົາຄວາມຜິດບາບຈາກເຮົາໂດຍສິ້ນພຣະຊົນເທິງໄມ້ກາງແຂນເພື່ອໃຫ້ເຮົາລອດພົ້ນຈາກການລົງໂທດ, ໃຫ້ເຮົາມີສັນຕິສຸກ, ມີຄວາມຍິນດີແລະມີຊີວິດໃໝ່.

<u>ພຣະເຈົ້າສ້າງມະນຸດດ້ວຍວິທີທີ່ແຕກຕ່າງກັບສິ່ງອື່ນໆ</u>

ໃນບົດທີ 3 ເຮົາໄດ້ຮຽນເຖິງເຣື່ອງການຊົງສ້າງຂອງພຣະເຈົ້າມາແລ້ວ. ເຮົາຈະຮຽນໃຫ້ເລິກ ເຊິ່ງເພີ້ມຂຶ້ນໃນບົດຮຽນນີ້

**1. ຄວາມແຕກຕ່າງຂອງການຊົງສ້າງ**:

1) <u>ເມື່ອພຣະເຈົ້າຊົງສ້າງມະນຸດ</u>

ກ. ຊົງປັ້ນດ້ວຍຝຸ່ນຂີ້ດິນ ປຖກ 2:7

ຂ. ຊົງສ້າງຕາມພຣະລັກສະນະຂອງພຣະອົງ ປຖກ 1:27

ຄ. ຊົງລະບາຍລົມຂອງພຣະອົງເຂົ້າໄປໃນຮູດັງມະນຸດ, ເຮັດໃຫ້ມະນຸດມີຊີວິດ ປຖກ 2:7

ງ. ຊົງໃຫ້ຄອບຄອງ, ມີສັດໃຊ້ງານ, ແລະໃຫ້ສັດເປັນອາຫານໄດ້ ປຖກ 1:28

ຈ. ຊົງໃຫ້ມະນຸດເຮັດວຽກງານ ຊຶ່ງໝາຍຄວາມວ່າມີຕໍາແໜ່ງຫນ້າທີ່ແລະມີເປົ້າຫມາຍໃນການມີຊີວິດຢູ່ ປຖກ 2:15

ສ. ຊົງໃຫ້ມີຄວາມສັມພັນກັບພຣະເຈົ້າ ປຖກ 3:8

2) <u>ເມື່ອພຣະອົງຊົງສ້າງສັດ</u>

ກ. ຊົງສ້າງດ້ວຍຄໍາສັ່ງບໍ່ໄດ້ລົງມືສ້າງ ( ບໍ່ໃຊ້ພຣະຫັດ ) ເໝືອນສ້າງມະນຸດ

ຂ. ບໍ່ໄດ້ສ້າງຕາມພຣະລັກສະນະຂອງພຣະອົງ
ຄ. ບໍ່ໄດ້ລະບາງລົມເຂົ້າໃນດັງສັດ, ດ້ວງເຫດນີ້ເຮົາຈຶ່ງຮູ້ວ່າສັດບໍ່ມີວິນຍານ
ງ. ໃຫ້ສັດມີຊີວິດຢູ່ພາຍໃຕ້ການຄອບຄອງຂອງມະນຸດ, ເປັນທາດໃຊ້ງານແລະເປັນອາຫານ
ຈ. ບໍ່ມີໜ້າທີ່, ຕໍາແໜ່ງໃນການງານ
ສ. ບໍ່ມີຄວາມສັມພັນກັບພຣະເຈົ້າ

ການສ້າງມະນຸດຕາມພຣະລັກສະນະຂອງພຣະເຈົ້າໝາຍຄວາມວ່າຢ່າງໃດ? ພຣະເຈົ້າຊົງກ່າວວ່າ " ໃຫ້ເຮົາສ້າງມະນຸດຕາມລັກສະນະຂອງເຮົາ" ການສ້າງຕາມລັກສະນະບໍ່ໄດ້ໝາຍຄວາມວ່າພຣະເຈົ້າສ້າງເຮົາໃຫ້ມີຮູບຮ່າງເໝືອນພຣະອົງ, ພຣະເຈົ້າເປັນພຣະວິນຍານ ( ໂຢຮັນ 4:24 ) ບໍ່ມີຮູບຮ່າງທີ່ເຮົາສາມາດເບິ່ງເຫັນດ້ວງຕາ. ການສ້າງຕາມພຣະລັກສະນະໝາຍຄວາມວ່າພຣະເຈົ້າ ຊົງສ້າງໃຫ້ເຮົາມີລັກສະນະເໝືອນພຣະອົງ ດັ່ງຕໍ່ໄປນີ້

1) ມີຈິດວິນຍານ
2) ມີຄວາມບໍຣິສຸດ
3) ຮູ້ຈັກໃຊ້ເຫດຜົນ, ພິຈາຣະນາ
4) ບໍ່ພຽງແຕ່ມີສັນຊາດສະຍານຢ່າງດຽວເໝືອນສັດ
5)ມີສະຕິປັນຍາໃນການສ້າງສາ
6) ມີຄວາມຮັກແບບພຣະເຈົ້າຄືຄວາມຮັກທີ່ບໍຣິສຸດບໍ່ເຫັນແກ່ໂຕ ຫລືມີເງື່ອນໄຂ
7) ສາມາດທີ່ຈະຄິດອ່ານ, ນະມັສການ, ແລະເຂົ້າໃຈໃນນໍ້າພຣະທັຍຂອງພຣະເຈົ້າ.

## 2. <u>ການສ້າງມະນຸດຜູ້ຍິງ:</u>

1) ພຣະເຈົ້າຊົງສ້າງຜູ້ຍິງຈາກກະດູກຂ້າງຜູ້ຊາຍ, ຄືຊົງບັນດານໃຫ້ມະນຸດຜູ້ຊາຍນອນຫລັບສນິດ ແລ້ວພຣະອົງຊົງດຶງເອົາກະດູກຂ້າງຂອງຜູ້ຊາຍອອກມາສ້າງເປັນຍິງ, ຈຶ່ງແມ່ນສີມື ( ພຣະຫັດ)ຂອງພຣະເຈົ້າເໝືອນກັບສ້າງຜູ້ຊາຍ ເພາະວ່າພຣະເຈົ້າຊົງລົງມືສ້າງເຊັ່ນດຽວກັນ.
2) ພຣະເຈົ້າສ້າງຜູ້ຍິງຕາມແນວຄິດຂອງພຣະອົງເຫມືອນກັບຊາຍ
3) ການທີ່ພຣະເຈົ້າສ້າງຜູ້ຍິງຈາກກະດູກຂ້າງຜູ້ຊາຍນັ້ນ ເມື່ອສ້າງແລ້ວພຣະອົງຊົງມອບໃຫ້ແກ່ຊາຍ ເປັນຄວາມຫມາຍກ່ຽວກັບຄວາມຮັກ, ເປັນອັນນຶ່ງອັນດຽວກັນ, ການເພິ່ງພາອາສັຍກັນແລະກັນຣະຫວ່າງຊາຍກັບຍິງ ຊຶ່ງຈະຂາດກັນແລະກັນບໍ່ໄດ້ ມາຈົນເຖິງທຸກວັນນີ້.

<u>ຊອກຫາກະດູກຂ້າງ:</u>

ດ້ວງເຫດນີ້ຜູ້ຊາຍຫລາຍຄົນເວລາຫາແຟນຫລືຫາເມັຽກໍຈະມັກແນະນໍາວ່ານີ້ຄືກະດູກຂ້າງຂອງຂ້ອຍ. ເປັນຫນ້າທີ່ຂອງຊາຍທີ່ຕ້ອງຮັກສາຄຸ້ມຄອງກະດູກຂ້າງຂອງຕົນໃຫ້ດີ( ບໍ່ແມ່ນຕັດອອກມາຕົ້ມກິນຫລືຕັດອອກມາເໜັບໄວ້ຂ້າງຝາ) ແລະຜູ້ຍິງກໍຄວນກະທໍາໂຕເປັນກະດູກຂ້າງທີ່ດີຂອງຊາຍດ້ວງ.

3. **ເປັນຫຍັງພຣະເຈົ້າຈຶ່ງສ້າງມະນຸດ**?:

ຄຳຖາມນີ້ໃຜໆ ກໍຢາກຮູ້ວ່າເຮົາເກີດມາເຮັດຫຍັງ? ມີຊີວິດຢູ່ເພື່ອອັນໃດ? ບາງຄົນບອກວ່າເກີດມາເພື່ອໃຊ້ກັມໃຊ້ເວນ, ບາງຄົນກໍເວົ້າວ່າຢູ່ໄປ, ກິນໄປ, ເຮັດງານໄປ, ແຕ່ງງານແລ້ວກໍຕາຍຈາກກັນໄປ.

1) ພຣະເຈົ້າສ້າງມະນຸດໃຫ້ມີໜ້າທີ່ການງານ, ຕຳແໜ່ງ, ຄວາມຮັບຜິດຊອບ, ແລະເປົ້າໝາຍ. ເມື່ອພຣະເຈົ້າສ້າງມະນຸດແລ້ວພຣະອົງກໍຊົງມອບເຂົາເຈົ້າທັງສອງໃຫ້ຢູ່ໃນສວນເອເດນເປັນຄົນດູແລຮັກສາສວນ ປຖກ 2:15 ສະແດງວ່າພຣະເຈົ້າບໍ່ໄດ້ສ້າງມະນຸດໃຫ້ຢູ່ໄປພຽງແຕ່ມື້ນຶ່ງວັນນຶ່ງ, ຕາມບຸນຕາມກັມ, ແຕ່ໃຫ້ມະນຸດມີຄວາມຂຍັນຂັນແຂງ, ມານະອົດທົນ, ມີເປົ້າໝາຍ, ມີຄວາມຮັບຜິດຊອບໃນຊີວິດ.
2) ໄດ້ຮັບຜົນປໂຍດ ແລະດູແລຮັກສາໂລກທີ່ພຣະເຈົ້າຊົງສ້າງໃຫ້ມະນຸດຢູ່. ຄຣິສຕຽນຄວນເຮັດວຽກແລະຮັບຜິດຊອບຢ່າງດີ, ດຸໝັ່ນ, ຊື່ສັດສຸຈຣິດ, ແລະປະຕິບັດຕົນໃຫ້ເໝາະສົມກັບການເປັນບຸດຂອງພຣະເຈົ້າ, ຢ່າກະທຳຄວາມຊົ່ວຕາມຄົນອື່ນ, ບໍ່ແມ່ນເຫັນຄົນອື່ນໂລບກໍໂລບນຳເຂົາ. ອ່ານ 2 ເທຊະໂລນີກ 3:13.
3) ໃຫ້ນະມັສການພຣະເຈົ້າ, ການນະມັສການຄືຄວາມຮູ້ສຶກສຳນຶກໃນຄວາມຍິ່ງໃຫຍ່ແລະໃນພຣະຄຸນຂອງພຣະອົງ ສັຣະເສີນພຣະເຈົ້າໃນຄຸນງາມຄວາມດີທີ່ພຣະອົງກະທຳເພື່ອພວກເຮົາ ໃນຖານະທີ່ພຣະອົງຊົງເປັນຜູ້ສ້າງແລະເປັນພຣະຜູ້ໄຖ່ຂອງພວກເຮົາ ພຣະຄັມພີກ່າວໄວ້ວ່າ "ພຣະເຈົ້າເປັນພຣະວິນຍານ ຜູ້ທີ່ນະມັສການພຣະອົງຕ້ອງນະມັສການດ້ວຍຈິດວິນຍານແລະຄວາມຈິງ" ໂຢຮັນ 4:24

4. **ການນະມັສການພຣະເຈົ້າ**:

1) ເປັນການນະມັສການທີ່ອອກມາຈາກສ່ວນເລິກຂອງຈິດໃຈ
2) ດ້ວຍຄວາມເຫລື້ອມໃສມີສັດທາຢ່າງແທ້ຈິງ
3) ບໍ່ແມ່ນການກະທຳເພື່ອອວດຄົນອື່ນ ຫລືເປັນແຕ່ພິທີກັມ, ຫຼືພຽງແຕ່ເປືອກນອກເທົ່ານັ້ນ.ຂໍ້ພຣະຄັມພີສຳລັບສຶກສາເພີ້ມເຕີມ 1 ຊາມູເອນ 15:25,30 ກິຈການ 8:28 ເພງສັຣເສີນ 99:1-5

**ຂໍ້ທ່ອງຈຳ**:

ພຣະເຈົ້າຊົງຕັດວ່າໃຫ້ເຮົາສ້າງມະນຸດຕາມລັກສະນະຂອງເຮົາ, ປຖກ . 1:16

**ຂໍ້ຄວນຈຳ**:

ເມື່ອເຮົາເຫັນຄວາມຈະເຣີນທາງວິທະຍາສາດແລະເທັກໂນໂລຢີ, ເຮົາໄດ້ເຫັນແຈ້ງເປັນຄວາມຈິງວ່າພຣະເຈົ້າສ້າງມະນຸດຂຶ້ນເປັນພິເສດແທ້ໆ ແຕ່ອີກທາງນຶ່ງເມື່ອເຮົາຄິດເຖິງຄວາມຊົ່ວ, ຄວາມບາບ, ການກະທຳຊົ່ວ, ຄາດຕະກັມ, ຄວາມບໍ່ຍຸດຕິທັມທີ່ມະນຸດກໍ່ຂຶ້ນ, ເຮົາກໍເສົ້າສລົດໃຈນຳເພາະວ່າມະນຸດຈຳນວນຫລາຍອວ່າຍຫລັງໃສ່ພຣະເຈົ້າ ເອົາໂຕເຂົ້າໄປມົ້ວສຸມກັບຄວາມບາບ, ທຳຮ້າຍກັນແລະກັນ, ຍາດແຍ່ງຊີງດີກັນ. ມີວິທີດຽວທີ່ຈະແກ້ບັນຫານີ້ໄດ້ກໍຄື ຖິ້ມໃຈເກົ່າເອົາໃຈໃໝ່ ອວ່າຍໜ້າມາຫາພຣະເຈົ້າ

ໂດຍເລີ່ມຕົ້ນຈາກໂຕທ່ານເອງກ່ອນ ເພື່ອທ່ານຈະມີຊີວິດເປັນແບບຢ່າງທີ່ດີ, ມີຄວາມຊອບທັມແລະມີສັນຕິສຸຂທີ່ພຣະເຈົ້າຊົງຈັດຕຽມໄວ້ສຳລັບທ່ານຕັ້ງແຕ່ເລີ່ມສ້າງໂລກ ເປັນຕົ້ນມາ.

**<u>ພາກປະຕິບັດ:</u>**

ໃຫ້ສຶກສາເບິ່ງໃນຫົວຂໍ້ທີ່ວ່າ "ຖ້າຫາກທ່ານມີອຳນາດສາມາດສ້າງມະນຸດຂຶ້ນມາໄດ້, ເມື່ອສ້າງຮຽບຮ້ອຍແລ້ວ ມະນຸດທີ່ທ່ານສ້າງຂຶ້ນມາໄດ້ກາຍເປັນກະບົດຕໍ່ສູ້ກັບທ່ານ, ທ່ານຈະເຮັດແນວໃດກັບມະນຸດທີ່ທ່ານໄດ້ສ້າງຂຶ້ນມາ?

**<u>ຂໍ້ຄິດທ້າຍບົດ</u>**

"ພຣະຄັມພີຂັດແຍ່ງກັບທິສະດີວິວັທະນາການຫລືບໍ່? ແລະຖ້າຂັດແຍ່ງ ຂັດແຍ່ງກັນບ່ອນໃດ? ຕໍ່ໄປນີ້ເປັນຂໍ້ຂັດແຍ່ງກັນ 5 ປະການລະຫວ່າງພຣະຄັມພີ ກັບທິສະດີວິວັທະນາການ ຂອງ ຊາຣ໌ລ ດາວິນ

| <u>ພຣະຄັມພີສອນວ່າ</u> | <u>ທິສະດີວິວັທະນາການກ່າວວ່າ</u> |
|---|---|
| 1. ການນີຣະມິດສ້າງຂຶ້ນຕາມກຳນົດ ມີຈຸດປະສົງ | 1. ທັມມະຊາດວິວັທນາການໂດຍອຸບັດຕິເຫດແລະບັງເອີນ |
| 2.ສິ່ງທີ່ມີຊີວິດຖືກສ້າງຂຶ້ນເທື່ອລະຢ່າງຕາມຊະນິດຂອງມັນ | 2. ສິ່ງທີ່ມີຊີວິດທຸກຢ່າງມາຈາກສັດແຊລດຽວໂດຍທາງວິວັທນາການ |
| 3.ມະນຸດຖືກສ້າງຂຶ້ນເປັນພິເສດແຕກຕ່າງກັບສັດທັງປວງ | 3.ມະນຸດເປັນສັດຊະນິດນຶ່ງວິວັທນາການມາຈາກສັດທີ່ຄ້າຍຄືລີງ |
| 4.ການນີຣະມິດສ້າງຂອງພຣະເຈົ້າສຳເຣັດພາຍໃນ 6 ວັນ | 4.ການວິວັທະນາການເກີດຂຶ້ນຕລອດເວລາເພື່ອໃຫ້ເກີດສິ່ງທີ່ມີຊີວິດຊະນິດໃໝ່ຂຶ້ນເລື້ອຍໆແລະສິ່ງເຫຼົ່ານີ້ກໍຍັງຄົງປ່ຽນໄປຈົນກະທັ່ງເຖິງປັດຈຸບັນນີ້ |
| 5.ທັມມະຊາດແຕ່ຕົ້ນຖືກສ້າງຂຶ້ນຢ່າງສົມບູນແລະດີເລີດ ສົມບູນແລະດີເລີດ ແຕ່ເກີດເຫດເສື່ອມລົງເນື່ອງຈາກອາດັມບໍ່ເຊື່ອຟັງພຣະເຈົ້າ | 5.ທັມມະຊາດຈະດີຂຶ້ນເລື້ອຍໆ, ດີຂຶ້ນດ້ວຍການປ່ຽນແປງທາງວິວັດທະນາການ |

_____✝_____

# ບົດຮຽນທີ 9

## ເສຣີພາບໃນການເລືອກຂອງມະນຸດ

**ເປົ້າໝາຍ:** ເພື່ອໃຫ້ຜູ້ຮຽນຮູ້ວ່າພຣະເຈົ້າບໍ່ໄດ້ສ້າງມະນຸດເໝືອນ "ເຄື່ອງຈັກ" ຫຼື "ຫຸ່ນຍົນ", ແຕ່ພຣະອົງຊົງສ້າງມະນຸດໃຫ້ມີເສລີພາບທີ່ຈະເລືອກ "ກະທຳດີ" ຫລື "ກະທຳຊົ່ວ" "ເຊື່ອຟັງ" ຫຼື "ບໍ່ເຊື່ອຟັງ" ພຣະອົງ.

**ຂໍ້ພຣະຄັມພີ:** ໂຢຊວຍ 24:15 ພວກຜູ້ປົກຄອງ 5:8

**ນິທານຊາວຢູດາ:**

ຊາວຢູດາມີນິທານເລົ່າຕໍ່ກັນມາ (ເຣື່ອງນີ້ບໍ່ປາກົດໃນພຣະຄັມພີຂອງຄຣິສຕຽນ) ເມື່ອຄາວ ພຣະເຈົ້າຈະນິຣະມິດສ້າງໂລກ ແລະສ້າງມະນຸດ, <u>ທູດສວັນແຫ່ງຄວາມຍຸດຕິທັມ</u> ໄດ້ເຂົ້າໄປຂາບທູນພຣະເຈົ້າວ່າ ຂໍຢ່າສ້າງມະນຸດເລີຍອົງພຣະຜູ້ເປັນເຈົ້າຂອງຂ້າພຣະອົງ ເພາະວ່າມະນຸດຈະທຳຄວາມບາບຄວາມຊົ່ວ, ໂຫດຮ້າຍທາລຸນ, ບໍ່ສັດຊື່ຕໍ່ພຣະອົງ, ແລະຈະເຮັດໃຫ້ໂລກຫວຸ້ນວາຍ. ຕໍ່ຈາກນັ້ນ, <u>ທູດສວັນແຫ່ງຄວາມສັດຊື່</u> ກໍຂາບທູນວ່າຂໍຢ່າສ້າງມະນຸດຂຶ້ນເລີຍອົງພຣະຜູ້ເປັນເຈົ້າ, ມະນຸດຈະເຮັດບໍ່ຊື່, ຄົດໂກງ, ແລະບິດເບືອນຄວາມຈິງຂອງພຣະອົງ, <u>ທູດສວັນແຫ່ງຄວາມບໍຣິສຸດ</u> ກໍຂາບທູນວ່າຂໍຢ່າສ້າງມະນຸດເລີຍ ເພາະມະນຸດຈະເຮັດໃຫ້ພຣະນາມອັນບໍຣິສຸດຂອງພຣະອົງຕ້ອງເສື່ອມເສັຽໄປ. ຫຼັງຈາກທີ່ງຽບໄປນ້ອຍນຶ່ງ, <u>ທູດສວັນແຫ່ງຄວາມເມດຕາກະຣຸນາ</u> ທູນວ່າ ໂຜດຊົງສ້າງມະນຸດເທີ້ນອົງພຣະຜູ້ເປັນເຈົ້າ ຖ້າເຂົາເຈົ້າກະທຳຄວາມຜິດຄວາມບາບລົງໄປ ຂ້າພຣະອົງເອງຈະເປັນຜູ້ຄອງຄອຍຊັກນຳເຂົາເຈົ້າໃຫ້ກັບມາຫາພຣະອົງ.

### 1. <u>ພຣະເຈົ້າຊົງປະທານເສຣີພາບໃນການເລືອກໃຫ້ແກ່ມະນຸດ</u>:

ຫລັງຈາກພຣະເຈົ້າສ້າງມະນຸດແລ້ວພຣະອົງໄດ້ສ້າງສວນເອເດນ ໃຫ້ເປັນທີ່ຢູ່ອາສັຍແລະ ບ່ອນເຮັດວຽກງານຂອງມະນຸດ, ພຣະອົງກາວຕໍ່ມະນຸດວ່າຫມາກໄມ້ທຸກໆຕົ້ນໃນສວນນີ້ເຈົ້າກິນໄດ້ເວັ້ນໄວ້ແຕ່ຕົ້ນໄມ້ທີ່ສຳນຶກໃນຄວາມດີຄວາມຊົ່ວ, ຫມາກໄມ້ຕົ້ນນັ້ນບໍ່ໃຫ້ກິນ ເພາະໃນວັນໃດທີ່ເຈົ້າຂືນກິນ ເຈົ້າຈະຕ້ອງຕາຍຢ່າງແນ່ແທ້ ( ປະຖົມການ 2:17 ). <u>ພຣະບັນຊາຂອງພຣະເຈົ້າບອກໃຫ້ເຮົາຮູ້ວ່າ</u>

1) ມະນຸດມີເສຣີພາບທີ່ຈະກິນໝາກໄມ້ຕົ້ນໃດກໍໄດ້
2) ແຕ່ມີຄຳສັ່ງຫ້າມໄວ້ວ່າ " ຍົກເວັ້ນແຕ່ຕົ້ນໄມ້ສຳນຶກຄວາມດີຄວາມຊົ່ວ" ຊຶ່ງເປັນຄຳສັ່ງຫ້າມ ບໍ່ແມ່ນຄຳສັ່ງທີ່ບັງຄັບໂດຍທີ່ບໍ່ໃຫ້ເຮົາມີທາງເລືອກ ( ພຣະອົງໃຫ້ມະນຸດມີທາງເລືອກ ).
3) ຜົນຂອງການບໍ່ເຊື່ອຟັງ ຄຳສັ່ງຂອງພຣະເຈົ້າບອກຕໍ່ໄປວ່າ "ເພາະຖ້າເຈົ້າຫາກກິນໝາກໄມ້ຕົ້ນນັ້ນໃນວັນໃດເຈົ້າຈະຕ້ອງຕາຍແທ້ໆ, ສະແດງວ່າມະນຸດມີສິດເສຣີພາບເລືອກທີ່ຈະກິນຫລືບໍ່ກິນກໍໄດ້ ແຕ່ວ່າມະນຸດໄດ້ເລືອກທີ່ຈະກະທຳຕາມໃຈຂອງຕົນເອງບໍ່ຟັງຄວາມຜູ້ໃດ. ເມື່ອມະນຸດເອົາຄວາມຢາກແລະຄວາມປາຖນາຂອງເຂົາເປັນສິ່ງສຳຄັນທີ່ນຶ່ງ ເຂົາກໍຈະໄດ້ຮັບຜົນສະທ້ອນຈາກສິ່ງນັ້ນເປັນການຕອບ

ສນອງ.

2. **ທຸກວັນນີ້ມະນຸດຍັງມີເສລີພາບຢູ່ຫລືບໍ່?:**

ມະນຸດໃນປັດຈຸບັນນີ້ບໍ່ໄດ້ຖືກສ້າງຂຶ້ນຕາມກົມມະວິທີດຽວກັນກັບມະນຸດຄູ່ແລກ, ແຕ່ພວກເຂົາໄດ້ສືບເຊື້ອສາຍມາຈາກມະນຸດຄູ່ແລກທີ່ພຣະເຈົ້າສ້າງຂຶ້ນ, ດັ່ງນັ້ນພວກເຮົາທັງຫລາຍຈຶ່ງແມ່ນພຣະເຈົ້າສ້າງຂຶ້ນມາຄືກັນ "ພວກເຮົາເປັນເຊື້ອສາຍຂອງພຣະເຈົ້າ" ກິຈການ 17:29 ດ້ວຍເຫດນີ້ມະນຸດເຮົາໃນສມັຍນີ້ຈຶ່ງມີເສຣີພາບໃນການເລືອກເຊັ່ນດຽວກັນ. ການເລືອກຂອງພວກເຮົາບໍ່ແມ່ນວ່າຈະກິນຫຼືຈະບໍ່ກິນໝາກໄມ້ທີ່ພຣະເຈົ້າຫ້າມ, ແຕ່ພວກເຮົາໄດ້ພົບການເລືອກໃນສິ່ງອື່ນໆ ເປັນຕົ້ນວ່າ...

1) ຈະເຊື່ອຟັງຫລືຈະປະຕິເສດພຣະເຈົ້າ
2) ຈະເດີນຕາມຄໍາສອນຂອງພຣະເຈົ້າຫລືເຮັດຕາມໃຈຕົນເອງ
3) ຈະກະທໍາດີຫລືກະທໍາຊົ່ວ
4) ວັນອາທິດຈະໄປໂບດຫລືໄປທ່ຽວ.

ເຮົາຈະເລືອກອັນໃດກໍໄດ້, ເຮົາມີເສຣີພາບ ແຕ່ເຮົາຕ້ອງຮັບຜິດຊອບຜົນສະທ້ອນທີ່ຕາມມາ.

3. **ຜົນສະທ້ອນທີ່ເກີດຂຶ້ນ ເມື່ອຜູ້ໃດຜູ້ນຶ່ງຍອມຮັບ ຫລືປະຕິເສດ ພຣະເຢຊູຄຣິດ:**

ຄຣູສາມາດສອນນັກຮຽນວ່າເຮັດແນວໃດຈຶ່ງຈະຮຽນເກັ່ງເສັງໄດ້ຄະແນນດີ, ແຕ່ຄຣູຈະນັ່ງຮຽນ, ສອບເສັງ, ຫລືຕັດສິນໃຈແທນນັກຮຽນບໍ່ໄດ້ ຜູ້ເປັນນັກຮຽນຈະຕ້ອງເລືອກເອງ. ຜູ້ຮັບໃຊ້ ພຣະເຈົ້າສາມາດສອນໃຫ້ທ່ານຮູ້ວ່າ ການກະທໍາຕາມຄໍາສອນຂອງພຣະເຈົ້າມີຜົນດີກັບຊີວິດຂອງທ່ານຢ່າງໃດ. ເຊື່ອແລະໄວ້ວາງໃຈໃນພຣະເຈົ້າແລ້ວຈະໄດ້ຮັບຊີວິດໃໝ່ລອດພົ້ນຈາກໂທດຂອງຄວາມຜິດບາບ, ມີຊີວິດອັນຕລອດໄປ, ມີສັນຕິສຸກ, ແຕ່ຜູ້ຮັບໃຊ້ຂອງພຣະເຈົ້າຈະເລືອກຫຼືຕັດສິນໃຈແທນທ່ານບໍ່ໄດ້ ທ່ານຈະຕ້ອງຕັດສິນໃຈເອົາເອງ. ຜົນສະທ້ອນຂອງການຍອມຮັບແລະການປະຕິເສດພຣະເຢຊູຄຣິດໄດ້ກ່າວໄວ້ດັ່ງລຸ່ມນີ້ (ໂຢຮັນ 3:16-21 )

**ຍອມຮັບ**

1) ບໍ່ພິນາດຈິບຫາຍແຕ່ມີຊີວິດອັນຕລອດໄປເປັນນິດໃນສວັນ
2) ບໍ່ຖືກພິພາກສາລົງໂທດ

**ປະຕິເສດ**

1) ຈະພິນາດຈິບຫາຍ, ຕ້ອງທົນທຸກທໍຣະມານໃນນະຣົກຕລອດໄປ
2) ຈະຖືກພິພາກສາລົງໂທດ

ນອກຈາກນີ້ແລ້ວໃນພຣະຄັມພີຕອນດຽວກັນນີ້ຍັງໄດ້ສອນເຖິງຄວາມມືດແລະຄວາມ ສວ່າງ ວ່າ ຄົນທີ່ຮັກຄວາມມືດໄດ້ແກ່ຄົນທີ່ຮັກຄວາມຊົ່ວແລະຄວາມອະທັມ, ລາວຢ້ານຄວາມສວ່າງເພາະ ຢ້ານວ່າຄວາມຊົ່ວຂອງຕົນຈະເປີດອອກ ເໝືອນສຸພາສິດທີ່ໄດ້ກ່າວໄວ້ວ່າ "ງົວຫຼັງບາດ ຄືຄົນທີ່ມີຄວາມຜິດຢູ່ແລ້ວໄດ້ເປັນທຸກໃຈ ຢ້ານຢູ່ຕລອດເວລາ ຢ້ານວ່າຄວາມບໍ່ດີຈະຖືກເປີດເຜີຍ" ວິທີແກ້ ບັນຫາກໍຄື ໃຫ້ຖິ້ມຄວາມ

ບາບຫຼືກັບໃຈໃໝ່ຫັນມາຫາພຣະເຈົ້າ, ແລ້ວພຣະອົງຈະຊົງຍົກໂທດໃຫ້, ຕໍ່ຈາກນັ້ນໃຫ້ເລີ້ມຕົ້ນດຳເນີນຊີວິດໃໝ່ຢ່າງມີສັນຕິສຸກແລະມີຄວາມຊົທຊື່ນຍິນດີ.

**<u>ແບກເຂົ້ານັ່ງຢູ່ເທິງກວຽນ</u>**:

ຄັ້ງນຶ່ງດົນມາແລ້ວ, ລູງຜູ້ນຶ່ງໄດ້ຊອກຊື້ເຂົ້າ ເມື່ອລາວຊື້ເຂົ້າໄດ້ໄຖ່ນຶ່ງແລ້ວລາວກໍແບກເຂົ້າໄຖ່ນັ້ນຍ່າງໄປຕາມທາງເພື່ອກັບຄືນເມືອເຮືອນ, ພໍດີມີໝູ່ຄົນນຶ່ງຂີ່ກວຽນມາທາງນັ້ນ ຈຶ່ງໄດ້ໃຫ້ລຸງຄົນນັ້ນຂຶ້ນກວຽນໄປນຳ, ແຕ່ພໍລາວຂຶ້ນໄປນັ່ງເທິງກວຽນແລ້ວ ແທນທີ່ລາວຈະວາງໄຖ່ເຂົ້າລົງເທິງ ກວຽນ ແຕ່ກັບແບກໄຖ່ເຂົ້າໄວ້ເທິງບ່າຂອງຕົນຕລອດທາງ. ເຣື່ອງນີ້ພາໃຫ້ພວກເຮົາມີຄວາມຄິດ ນຶ່ງເກີດຂຶ້ນໃນໃຈວ່າ ໃນປັດຈຸບັນນີ້ມີຄົນເປັນຈຳນວນຫຼາຍທີ່ຍັງແບກພາຣະແຫ່ງຄວາມບາບແລະຄວາມທຸກຂອງຕົນຢູ່, ທັງໆ ທີ່ພຣະເຢຊູຄຣິດໄດ້ສະເດັດເຂົ້າມາໃນໂລກນີ້ຮັບເອົາໂທດແທນຄວາມ ຜິດບາບຂອງເຂົາເຈົ້າແລ້ວກໍຕາມ. ຖ້າເຂົາເຈົ້າຫາກຍອມຮັບເອົາພຣະອົງເປັນຜູ້ຊ່ອຍໃຫ້ລອດພົ້ນ ດ້ວຍການຖິ້ມໃຈເກົ່າເອົາໃຈໃໝ່, ຫັນຫລັງໃຫ້ຄວາມບາບຫັນໜ້າມາຫາພຣະເຈົ້າ ເຂົາເຈົ້າກໍຈະໄດ້ຮັບການຍົກໂທດ ບໍ່ໄດ້ແບກພາຣະຄວາມບາບຂອງຕົນອີກຕໍ່ໄປ. ບໍ່ຕ້ອງເປັນທຸກໃຈອີກວ່າບາບກັມທີ່ຕົນເຮັດໄວ້ນັ້ນຈະກັບຄືນມາສນອງ. ການເລືອກນີ້ ທ່ານຕ້ອງເລືອກດ້ວຍຕົວທ່ານເອງ.

**<u>ເຫດໃດຂ້າພະເຈົ້າຈຶ່ງກັບມາ</u>**?

ດຣ. ຫຼິນ ຢູ່ ຖັງ ນັກຂຽນທີ່ມີຊື່ສຽງ ໄດ້ແຕ່ງໜັງສືໄວ້ຫຼາຍເຫຼັ້ມ ທັງພາສາຈີນແລະພາສາ ອັງກິດອາຈານໃນມະຫາວິທຍາລັຍ "ນານກິງ" ທ່ານນີ້ ແຕ່ກ່ອນທ່ານບໍ່ໄດ້ເຊື່ອໃນພຣະເຈົ້າ. ໃນປີ ຄ.ສ 1957 ທ່ານໄດ້ຂຽນໜັງສືເຣື່ອງ "ຄວາມສຳຄັນຂອງການມີຊີວິດຢູ່" ໃຫ້ເຫດຜົນຄັດຄ້ານຄວາມເຊື່ອເຣື່ອງພຣະເຈົ້າແລະອະທິບາຍວ່າເຫດໃດທ່ານຈຶ່ງເຊື່ອບໍ່ໄດ້. ແຕ່ຕໍ່ມາໃນປີ 1959 ທ່ານໄດ້ພົບຄວາມຈິງກ່ຽວກັບຄວາມເຊື່ອຂອງຄຣິສຕຽນ, ທ່ານໄດ້ກັບໃຈເປັນຄຣິສຕຽນແລະໄດ້ຂຽນໜັງສື ຂຶ້ນອີກເຫຼັ້ມນຶ່ງຊື່ວ່າ "ຈາກຄົນທີ່ບໍ່ມີສາສນາສູ່ຊີວິດຄຣິສຕຽນ" ທ່ານໄດ້ໃຫ້ເຫດຜົນວ່າເປັນຫຍັງ
ທ່ານຈຶ່ງເປັນຄຣິສຕຽນຢ່າງໄວແບບນີ້, ດັ່ງລຸ່ມນີ້.

1) ຂ້າພະເຈົ້າຕ້ອງການພຣະບັນຍັດຂອງພຣະເຈົ້າ ແລະຄວາມຮັກຂອງພຣະອົງ ຊຶ່ງໄດ້ສະແດງອອກຢ່າງແຈ່ມແຈ້ງແລະເຂົ້າໃຈງ່າຍ
2) ຂ້າພະເຈົ້າຮູ້ສຶກວ່າມີຊີວິດຢູ່ໃນໂລກນີ້ມາໄດ້ 30 ປີແລ້ວ ເປັນເໝືອນລູກກຳພ້າ ແຕ່ບັດນີ້ຂ້າພະເຈົ້າບໍ່ແມ່ນລູກກຳພ້າຕໍ່ໄປອີກແລ້ວ, ບໍ່ໄດ້ຫຼົງເສັຽໄປ, ແຕ່ໄດ້ກັບຄືນມາອີກ. ການໄປນະມັສການພຣະເຈົ້າກັບພີ່ນ້ອງຄຣິສຕຽນເປັນການກັບຄືນບ້ານຂອງຂ້າພະເຈົ້າ

**<u>ຂໍ້ທ່ອງຈຳ</u>**:

ຜູ້ທີ່ວາງໃຈໃນພຣະບຸດກໍບໍ່ໄດ້ຖືກພິພາກສາລົງໂທດ ( ໂຢຮັນ 3:18 )

**<u>ຂໍ້ຄວນຈຳ</u>**:

ພຣະເຈົ້າສັນຍາວ່າພຣະອົງຈະຍົກໂທດໃຫ້, ເມື່ອເຮົາກັບໃຈໃໝ່, ສາລະພາບບາບ, ຫັນຫລັງໃຫ້ກັບຊີວິດເກົ່າ, ແຕ່ພຣະອົງບໍ່ໄດ້ສັນຍາວ່າຈະລົບລ້າງຜົນສະທ້ອນທີ່ເກີດຂຶ້ນຈາກການຕັດສິນໃຈເລືອກເດີນໃນທາງຜິດຂອງເຮົາ.

**<u>ພາກປະຕິບັດ</u>**:

ໃຫ້ທ່ານຂຽນຊື່ຂອງທ່ານລົງໃນຊ່ອງຫວ່າງຂ້າງລຸ່ມນີ້ຖ້າທ່ານຈະຮັບເອົາພຣະເຢຊູຄຣິດເປັນພຣະຜູ້ຊ່ອຍໃຫ້ລອດພົ້ນ. ແຈ້ງໃຫ້ຄຣູຫລືຜູ້ນຳຂອງຄຣິສຕະຈັກຂອງທ່ານຊາບເພື່ອທ່ານຈະໄດ້ຮັບຄວາມຊ່ອຍເຫລືອແນະນຳໃຫ້ທ່ານເຂັ້ມແຂງຂຶ້ນ. ເມື່ອຂຽນຊື່ແລ້ວໃຫ້ອ່ານໃນໃຈສາມເທື່ອ (ສ່ວນຜູ້ທີ່ເປັນຄຣິສຕຽນແລ້ວໃຫ້ຂຽນຊື່ຂອງຕົນ, ແລ້ວຂອບພຣະຄຸນພຣະເຈົ້າ).

"ແຕ່ສ່ວນບັນດາຜູ້ທີ່___________ ພຣະອົງ ຄືຜູ້ທີ່ເຊື່ອໃນພຣະນາມຂອງພຣະອົງ, ພຣະອົງກໍຊົງປະທານສິດໃຫ້ກາຍເປັນບຸດຂອງພຣະເຈົ້າ" ( ໂຢຮັນ 1:12. )

ຂຽນຊື່ :______________________

ວັນທີ:____________________

_____✞_____

*ຮຽບຮຽງ: ໄພສານ ສິມສິດທ໌*

# <u>ບົດຮຽນທີ 10</u>

# ຄວາມບາບຂອງມະນຸດແລະການຊ່ວຍໃຫ້ລອດພົ້ນດ້ວຍພຣະຄຸນຂອງພຣະເຈົ້າ

ເປົ້າໝາຍ: ເພື່ອໃຫ້ຜູ້ຮຽນຮູ້ວ່າມະນຸດມີນິສັຍແລະທັມມະຊາດມັກເຮັດບາບ, ແຕ່ມະນຸດສາມາດລອດພົ້ນບາບໄດ້ໂດຍພຣະຄຸນຂອງພຣະເຈົ້າ ( ຂໍ້ພຣະຄັມພີ ໂຣມ 3:23-26, 10-18, 5:6,12,18-19 )

**ເປັນຫຍັງ?**

ເປັນຫຍັງໝາຈຶ່ງໄລ່ແມວ, ແມວມັກໄລ່ໜູ, ບໍ່ມີໃຜສອນມັນ ເພາະທັມມະຊາດຂອງມັນເປັນເຊັ່ນນັ້ນ. ໃນທຳນອງດຽວກັນ ບໍ່ມີໃຜສອນຄົນເຮົາໃຫ້ເຮັດບາບ, ເຮັດຊົ່ວ, ມະນຸດເຮັດບາບຕາມທັມມະຊາດ. ເປັນຫຍັງເຮົາຈຶ່ງເຮັດບາບ, ເຮັດຊົ່ວ, ທັງໆ ທີ່ເຮົາບໍ່ຢາກເຮັດ? ຫລັກຄວາມຈິງດັ່ງກ່າວນີ້ຢືນຢັນໃຫ້ເຮົາຮູ້ວ່າ ມະນຸດຊ່ວຍຕົນເອງໃຫ້ພົ້ນຈາກບາບບໍ່ໄດ້, ນອກຈາກວ່າຈະໄດ້ຮັບການຊ່ວຍເຫລືອຈາກພຣະເຈົ້າ.

**1. ຄວາມບາບຄືຫຍັງ?:**

ດຣ. ພອລ ໄວ ນັກຮຽນຄຣິສຕຽນຜູ້ມີຊື່ສຽງຄົນນຶ່ງແນມເຫັນບາດແຜນ້ອຍໆ ທີ່ປາກຂອງຊ່າງຕັດຜົມ ລາວຈຶ່ງເຕືອນຊ່າງຕັດຜົມໃຫ້ໄປຫາໝໍເພື່ອປິ່ນປົວ ແຕ່ຊ່າງຕັດຜົມບໍ່ສົນໃຈຄິດວ່າພຽງແຕ່ເປັນບາດນ້ອຍໆ ຄົງຈະບໍ່ເປັນອັນຕະລາຍ. ຕໍ່ມາອີກບໍ່ດົນບາດນ້ອຍໆ ນັ້ນໄດ້ລາມອອກກາຍເປັນບາດໃຫຍ່ ຊ່າງຕັດຜົມຈຶ່ງໄປຫາໝໍ ປາກົດວ່າລາວເປັນພະຍາດມະເຮັງ, ບາດນັ້ນໄດ້ເປື່ອຍຫຼາຍຂຶ້ນຈົນໝໍບໍ່ສາມາດປິ່ນປົວໄດ້ ຕໍ່ມາລາວກໍຕາຍຍ້ອນບາດນ້ອຍໆ ນັ້ນ. ຄວາມບາບອາດຈະເລີ້ມຕົ້ນຈາກຈຸດນ້ອຍໆ ກ່ອນ ແຕ່ມັນສາມາດນຳໄປສູ່ຄວາມຕາຍໄດ້. ຕາມຄວາມໝາຍຂອງພາສາ ກຣີກຊຶ່ງເປັນພາສາດັ້ງເດີມຂອງພຣະຄັມພີໃໝ່ຄຳວ່າ "ບາບ" ຫມາຍເຖິງການຜິດຈາກເປົ້າຫມາຍທີ່ກຳນົດໄວ້ ເໝືອນກັບຍິງລູກທະນູບໍ່ຖືກເປົ້າ.

1) ຄວາມບາບຄື ການບໍ່ໄດ້ເຮັດໃນສິ່ງທີ່ຄວນເຮັດ, ຢາໂກໂບ 4:17
2) ຄວາມບາບຄື ການເຮັດຜິດສິນທັມແລະເຮັດຊົ່ວ, ໂຣມ 1:26-30
3) ຄວາມບາບຄື ການເຫັນດີກັບຄົນທີ່ເຮັດຊົ່ວ, ໂຣມ 1:3
4) ຄວາມບາບຄື ການນະມັສການສິ່ງທີ່ພຣະເຈົ້າສ້າງ ແທນທີ່ຈະນະມັສການພຣະເຈົ້າຜູ້ຊົງສ້າງ, ໂຣມ 1: 25
5) ຄວາມບາບຄື ການບໍ່ຢຳເກງພຣະເຈົ້າ, ໂຣມ 3:18
6) ຄວາມບາບຄື ການເຮັດຜິດຕໍ່ຄຳສັ່ງຂອງພຣະເຈົ້າ, 1 ໂຢຮັນ 3:4

ຄວາມເປັນມາຂອງຄວາມບາບ

ຄວາມບາບເກີດຈາກຄວາມບໍ່ພໍໃຈຂອງມະນຸດ ທີ່ຕ້ອງຢູ່ໃນຂອບເຂດທີ່ພຣະເຈົ້າຈັດຕຽມ ໄວ້ໃຫ້ ເມື່ອພຣະເຈົ້າສ້າງມະນຸດຄູ່ທຳອິດ ພຣະອົງໃຫ້ເຂົາຢູ່ໃນສວນເອເດນ ພຣະອົງຊົງປະທານທຸກສິ່ງທຸກຢ່າງໃຫ້ ແຕ່ມະນຸດບໍ່ພໍໃຈໄດ້ລະເມີດຕໍ່ພຣະບັນຍັດທີ່ພຣະເຈົ້າຊົງສັ່ງໄວ້, ມະນຸດເຊື່ອຕົນເອງແທນທີ່ຈະເຊື່ອ

ພຣະເຈົ້າ, ພະຍາຍາມສະຖາປະນາຕົນເອງຂຶ້ນເປັນພຣະເຈົ້າ ປຖກ 3:1-6

2. <u>ມະນຸດເປັນຄົນບາບທຸກຄົນຫຼື</u>?:

ພຣະທັມ ໂຣມ 3:23 ກ່າວໄວ້ວ່າ ເພາະວ່າທຸກຄົນເຮັດຜິດບາບແລະເສື່ອມຈາກພຣະຣັສມີຂອງພຣະເຈົ້າ

1) ມະນຸດເປັນຄົນບາບໂດຍທັມມະຊາດ ໂຕຢ່າງທີ່ເຫັນໄດ້ງ່າຍກໍຄື ເຮົາບໍ່ຈຳເປັນຕ້ອງສອນກັນໃຫ້ຕົວະ, ໃຫ້ອິດສາ, ໃຫ້ສໍ້ໂກງແລະເຮັດບາບ ແຕ່ຄົນເຮົາເຮັດເອງໂດຍທັມມະຊາດ ແຕ່ການເຮັດດີນັ້ນຕ້ອງສອນກັນຈົນເມື່ອຍ, ເຖິງແມ່ນວ່າສອນແລ້ວສອນອີກກໍຍັງບໍ່ຈື່ຈຳ, ແລະບໍ່ຍອມເຊື່ອຟັງ.

2) ມະນຸດເຮັດບາບໂດຍສມັກໃຈ ຫຼືເລືອກທີ່ຈະເຮັດ ເຮົາໄດ້ຮຽນຮູ້ຈາກບົດຮຽນກ່ອນໆ ແລ້ວວ່າພຣະເຈົ້າສ້າງມະນຸດໃຫ້ມີເສຣີພາບໃນການເລືອກ ເຮັດດີ, ເຮັດຊົ່ວ, ປະຕິເສດ, ຫລືເຊື່ອຟັງພຣະເຈົ້າ. ເມື່ອມະນຸດເຮັດບາບກໍໝາຍເຖິງວ່າເຂົາເຮັດຍ້ອນວ່າເຂົາເລືອກທີ່ຈະເຮັດເຊັ່ນນັ້ນ. ດັ່ງນັ້ນມະນຸດທຸກຄົນຈຶ່ງເປັນຄົນບາບໂດຍທັມມະຊາດ ແລະໂດຍການຕັດສິນໃຈທີ່ຈະເຮັດບາບດ້ວຍຕົນເອງ

3. <u>ມີຫຍັງເກີດຂຶ້ນເມື່ອມະນຸດເຮັດບາບ</u>?

1) ຕົກຢູ່ພາຍໃຕ້ການພິພາກສາຂອງພຣະເຈົ້າ, ໂຣມ 2:5 ; ເພງສັຣເສີນ 1: 5

2) ຕ້ອງທົນທຸກລຳບາກ, ປະຖົມການ 3:16-17,19

3) ຕ້ອງປະເຊີນກັບພັຍທັມມະຊາດ, ປະຖົມການ 3:18

4) ຕ້ອງຕາຍ, ຫມາຍເຖິງຕາຍທັງຝ່າຍຮ່າງກາຍແລະຝ່າຍວິນຍານ ຊຶ່ງຖືກຕັດຂາດຈາກພຣະເຈົ້າຕລອດໄປເປັນນິດ, ປະຖົມການ 3:19 ໂຣມ 7:19 <u>ມະນຸດມີຄວາມຫວັງຫລືບໍ່?</u> ເມື່ອມະນຸດເຮັດບາບ, ແຜນການແຫ່ງຄວາມສຸກຄວາມຍິນດີທີ່ພຣະເຈົ້າຊົງຕຽມໄວ້ໃຫ້ກໍກາຍເປັນຄວາມໂສກເສົ້າ.

1) ແທນທີ່ຈະໄດ້ຢູ່ໃກ້ຊິດກັບພຣະເຈົ້າ, ເຂົາຕ້ອງຫລົບຫນີຈາກພຣະເຈົ້າ.

2) ແທນທີ່ຈະເຮັດຕາມນໍ້າພຣະທັຍຂອງພຣະເຈົ້າ, ເຂົາເຮັດຕາມໃຈຕົນເອງ.

3) ບໍ່ສາມາດຄືນດີກັບພຣະເຈົ້າໄດ້ດ້ວຍກຳລັງຂອງຕົນເອງ, ຕ້ອງຕົກຢູ່ໃນຄວາມຜິດຫວັງ.

4. <u>ຄວາມຫວັງຂອງມະນຸດຄືການລອດພົ້ນດ້ວຍພຣະຄຸນຂອງພຣະເຈົ້າ</u>

"ພຣະຄຸນ" ຄືສິ່ງທີ່ເຮົາໄດ້ຮັບລ້າໆ ຫລືຜູ້ອື່ນເອົາມາໃຫ້ເຮົາລ້າໆ ໂດຍທີ່ເຮົາບໍ່ໄດ້ຊື້ ຫລືເຮັດເອົາເອງເຖິງແມ່ນວ່າເຮົາບໍ່ເໝາະສົມທີ່ຈະໄດ້ຮັບ ແຕ່ເຮົາກໍໄດ້ຮັບ "ດ້ວຍວ່າທ່ານທັງຫລາຍໄດ້ຖືກຊົງໂຜດໃຫ້ພົ້ນນັ້ນກໍຍ້ອນພຣະຄຸນດ້ວຍທາງຄວາມເຊື່ອ ສິ່ງເຫຼົ່ານີ້ບໍ່ໃຊ່ພວກທ່ານເຮັດເອົາເອງ ແຕ່ພຣະເຈົ້າຊົງປະທານໃຫ້ " ເອເຟໂຊ 2:8 <u>ພຣະຄັມພີຂໍ້ນີ້ຊີ້ໃຫ້ເຮົາເຫັນຄວາມຈິງວ່າ...</u>

1) ມະນຸດຊຶ່ງເປັນຄົນບາບຈະມີໂອກາດລອດພົ້ນໄດ້ໂດຍພຣະຄຸນຂອງພຣະເຈົ້າ

2) ແຕ່ວ່າ...ກ່ອນທີ່ຈະພົ້ນໄດ້ໂດຍພຣະຄຸນຂອງພຣະເຈົ້າຈະຕ້ອງມີຄວາມເຊື່ອກ່ອນ ຄວາມເຊື່ອ

ນີ້ຫມາຍເຖິງການເຊື່ອແລະໄວ້ວາງໃຈໃນພຣະເຢຊູຄຣິດ ແລະຕ້ອງເຊື່ອວ່າພຣະອົງຍອມຕາຍເທິງໄມ້ກາງແຂນເພື່ອໄຖ່ບາບແກ່ຕົນ.

**<u>ເພງຮິດຕລອດ 250 ປີ</u>**

ຈອນ ນິວຕັນ ຊຶ່ງມີຊີວິດຢູ່ລະຫວ່າງປີ 1725 - 1807 ເຄີຍມີຊີວິດທີ່ຊົ່ວຊ້າຫລາຍລາວເປັນພໍ່ຄ້າທາດ ໄດ້ເດີນທາງຂ້າມທະເລເພື່ອຈັບຄົນຫນັງດຳໃນອັບຟະຣິກາໄປຂາຍເປັນທາດຕາມປະເທດຕ່າງໆ. ຄັ້ງນຶ່ງໃນຂະນະທີ່ລາວເດີນທາງໆ ເຮືອຢູ່ ລາວໄດ້ປະເຊີນກັບບັນຫາຫລາຍຢ່າງ. ໃນຣະຫວ່າງທີ່ພົບກັບບັນຫາອັນໜັກໜ່ວງຊຶ່ງທ້າທາຍຕໍ່ຊີວິດຂອງລາວຢູ່ນັ້ນ ລາວໄດ້ຄິດເຖິງເຣື່ອງ ພຣະເຈົ້າທີ່ລາວໄດ້ເຄີຍຮຽນມາແຕ່ຍັງນ້ອຍ. ລາວຈຶ່ງໄດ້ອະທິຖານວິງວອນຂໍໃຫ້ພຣະເຈົ້າຊ່ອຍລາວ. ພຣະເຈົ້າຊົງເມດຕາຟັງຄຳອະທິຖານຂອງ ລາວແລະຊ່ອຍລາວໃຫ້ປອດພັຍ. ຕໍ່ມາລາວໄດ້ເຊົາເປັນພໍ່ຄ້າທາດແລະກັບໃຈໃຫມ່, ຫັນຫລັງໃຫ້ຄວາມບາບ, ກັບໃຈເປັນຜູ້ຮັບໃຊ້ຂອງພຣະເຈົ້າ ຄືໄດ້ຮັບຫນ້າທີ່ເປັນສິດຍາພິບານປະຈຳໂບດຈົນລາວໄດ້ເສັຽຊີວິດ ເມື່ອອາຍຸ 82 ປີ ໃນວາຣະສຸດທ້າຍຂອງຊີວິດ ລາວກ່າວໄວ້ວ່າ "ຂ້າພະເຈົ້າຈື່ຈຳໄດ້ 2 ຢ່າງຄື "

1) ຂ້າພະເຈົ້າເປັນຄົນບາບທີ່ຊົ່ວຊ້າຫຼາຍ
2) ພຣະເຢຊູຄຣິດມີຣິດອຳນາດ ເປັນຜູ້ຊ່ອຍໃຫ້ລອດພົ້ນ

ຈອນ ນິວຕັນ ໄດ້ແຕ່ງເພງຂຶ້ນຫລາຍເພງ ໃນການຮັບໄຊ້, ນະມັສການ, ແລະສັຣເສີນພຣະເຈົ້າ. ໃນຈຳນວນນັ້ນມີຢູ່ເພງນຶ່ງຊື່ວ່າ "ພຣະຄຸນພຣະເຈົ້າ" (ເປັນພາສາໃຫຽ 136 ພາສາລາວ) ຊຶ່ງເປັນທີ່ນິຍົມຮ້ອງກັນທົ່ວໂລກ, ແປເປັນພາສາຕ່າງໆ ຫລາຍພາສາ, ແມ່ນແຕ່ຄົນນອກໂບດກໍຍັງນິຍົມຮ້ອງກັນຈົນຕິດອັນດັບເພງຮິດຫລາຍເທື່ອຕລອດເວລາ 250 ປີ. ຕອນນຶ່ງຂອງເພງມີເນື້ອຄວາມວ່າ......

" ພຣະຄຸນພຣະເຈົ້ານັ້ນແສນຊື່ນໃຈ ຊ່ອຍໄດ້ຄົນຊົ່ວຢ່າງຂ້າ
ຄັ້ງນັ້ນຂ້າຫລົງພຣະອົງຕາມຫາ ຕາບອດແຕ່ຂ້າເຫັນແລ້ວ" (ເພງ Amazing Grace )

**<u>ຂໍ້ທ່ອງຈຳ</u>**:

"ດ້ວຍວ່າທ່ານທັງຫລາຍໄດ້ຖືກຊົງໂຜດໃຫ້ພົ້ນນັ້ນ ກໍຍ້ອນພຣະຄຸນດ້ວຍທາງຄວາມເຊື່ອ ສິ່ງເຫຼົ່ານີ້ບໍ່ໃຊ່ພວກທ່ານເຮັດເອົາເອງ ແຕ່ພຣະເຈົ້າຊົງປະທານໃຫ້. " ເອເຟໂຊ 2:8

**<u>ຂໍ້ຄວນຈຳ</u>**:

ພຣະຄຸນພຣະເຈົ້າໃຫຍ່ກວ່າບາບຂອງເຮົາ

**<u>ພາກປະຕິບັດ</u>**:

ຂຽນຄວາມບາບທີ່ທ່ານເຄີຍເຮັດໃສ່ແຜ່ນເຈັ້ຽ ແລ້ວອະທິຖານຂໍໃຫ້ພຣະເຈົ້າຊົງຍົກໂທດໃຫ້ແກ່ທ່ານ, ແລ້ວຂຽນຄໍາວ່າພຣະຄຸນພຣະເຈົ້າໂຕໃຫຍ່ໆ ເຕັງເທິງລາຍການຄວາມບາບນັ້ນ ເພື່ອເປັນເຄື່ອງຫມາຍສະແດງວ່າພຣະຄຸນພຣະເຈົ້າໃຫຍ່ກວ່າບາບຂອງທ່ານ. ພຣະອົງຍົກໂທດໃຫ້ທ່ານໄດ້ໂດຽພຣະຄຸນຂອງພຣະອົງ, ເພາະວ່າທ່ານໄດ້ເຊື່ອໄວ້ວາງໃຈໃນພຣະອົງແລະໄດ້ກັບໃຈໃຫມ່ແລ້ວ.

———✞———

*ຮຽບຮຽງ: ໄພສານ ສິມສິດທ໌*